ບໍລິສັດ ພູເບ້ຍ ມາຍນິ່ງ ຈຳກັດ (ມະຫາຊົນ)

2018

ບົດລາຍງານປະຈຳປີ ແລະ
ການພັດທະນາແບບຍືນຍົງ

PHU BIA MINING

ບໍລິສັດ ພູເບ້ຍ ມາຍນິງ ກ້າວໄປຂ້າງໜ້າຍ້ອນ ກຳລັງຂອງພະນັກງານບໍລິສັດ, ບໍ່ແມ່ນ ເຫຼົ້ານ້ຳ.ມັນແມ່ນຍ້ອນກຳລັງລ້ຽງພະນັກງານ ບໍລິສັດ ພູເບ້ຍ ມາຍນິງ ທີ່ເປັນຜູ້ພັດທະນາ ແລະ ດຳເນີນໂຄງການລະດັບໂລກໃນສະພາບພູມີປະ ເທດທີ່ມີຄວາມທ້າທາຍ. ມັນແມ່ນ ພະນັກງານ ຂອງພວກເຮົາເປັນຜູ້ເສີມຂະຫຍາຍ ສາຍພົວພັນ ທີ່ເປັນສ່ວນສຳຄັນໃນການດຳເນີນງານ ແລະ ກົດ ຈະກຳຕ່າງໆຂອງບໍລິສັດ ແລະ ແມ່ນພະນັກງານ ຂອງພວກເຮົາເປັນຜູ້ກຳນົດອະນາຄົດໃນຕໍ່ໜ້າ ຂອງບໍລິສັດ. ພື້ນຖານ ຄວາມສຳເລັດ ແມ່ນມາຈາກ ຄວາມເຂັ້ມແຂງຂອງສາຍພົວພັນຂອງພວກເຮົາ ກັບພະນັກງານ, ຊຸມຊົນ, ລັດຖະບານປະເທດເຈົ້າ ພາບ, ຜູ້ສະໜອງ, ເພື່ອນຮ່ວມງານ ແລະ ຄູ່ຮ່ວມ ງານຂອງພວກເຮົາ.

ຂໍ້ມູນຫຍໍ້ ກ່ຽວກັບບໍລິສັດ

ບໍລິສັດ ພູເບ້ຍ ມາຍນິງ ຈຳກັດ ('ພູເບ້ຍ ມາຍນິງ', 'ບໍລິສັດ') ເປັນບໍລິສັດທີ່ນຳໜ້າດ້ານການຂຸດຄົ້ນ ແລະ ຜະລິດແຮ່ທອງ ແລະ ຄຳ ໃນ ສປປ ລາວ.

ໂຄງການຜະລິດທີ່ສຳຄັນ ໃນເຂດສຳປະທານຂອງບໍລິສັດ ແມ່ນໂຮງງານຜະລິດ-ປຸງແຕ່ງ ທອງ-ຄຳ ພູຄຳ, ແລະ ໂຮງງານຜະລິດ-ປຸງແຕ່ງ ຄຳ-ເງິນ ບ້ານຫ້ວຍຊາຍ, ເຊິ່ງທັງສອງໂຮງງານແມ່ນຕັ້ງຢູ່ພາຍໃຕ້ເນື້ອທີ່ສຳປະທານຂອງບໍລິສັດທັງໝົດ 2,600 ກິໂລຕາແມັດ ('ເຂດສັນຍາ').

ບໍລິສັດ ພູເບ້ຍ ມາຍນິງ ໄດ້ເຊັນສັນຍາສຳຫຼວດ ແລະ ຜະລິດແຮ່ທາດ ຮ່ວມກັບລັດຖະບານລາວ ເຊິ່ງໄດ້ກຳນົດເງື່ອນໄຂຕ່າງໆໃນການສຳຫຼວດ, ການພັດທະນາ ແລະ ກິດຈະກຳການຂຸດຄົ້ນແຮ່ທາດພາຍໃຕ້ເຂດສັນຍາ, ແລະ ໄດ້ກຳນົດພັນທະທາງດ້ານອາກອນ ແລະ ຄ່າຊົບພະຍາກອນແຮ່ທາດ.

ໂຄງສ້າງຂອງບໍລິສັດ

ບໍລິສັດ ແພນອອສ ຈຳກັດ ຖືຮຸ້ນ 90 ສ່ວນຮ້ອຍ ຂອງ ບໍລິສັດ ພູເບ້ຍ ມາຍນິງ ແລະ ລັດຖະບານລາວຖືຮຸ້ນ 10 ສ່ວນຮ້ອຍ.

ກວາງດົງ ຣາຍຊິງ ເອທເຄ (ໂຮນດົງ) ຈຳກັດ, ເຊິ່ງເປັນບໍລິສັດໃນເຄືອຂອງ ກວາງດົງ ຣາຍຊິງ ແອຊ໌ເຊັດ ເມເນັດຈ໌ເມັ້ນ (GRAM) ໄດ້ເປັນເຈົ້າຂອງ ບໍລິສັດ ແພນອອສ ຈຳກັດ.ແກຣມ (GRAM) ແມ່ນບໍລິສັດລັດວິສາຫະກິດຂອງຈີນທີ່ດຳເນີນງານພາຍໃຕ້ຄະນະກຳມາທິການບໍລິຫານ ແລະ ຊີ້ນຳດ້ານຊັບສິນຂອງລັດວິສາຫະກິດ, ລັດຖະບານປະຊາຊົນຂອງແຂວງກ່ວາງຕุ้ງຢູ່ ຈີນ.

ຫ້ອງການສຳນັກງານໃຫຍ່ຂອງບໍລິສັດ ແພນອອສ ຕັ້ງຢູ່ເມືອງບຣິສເບີນ, ປະເທດອິດສະຕຣາລີ. ຫ້ອງການສຳນັກງານໃຫຍ່ ໄດ້ຊີ້ນຳ ແລະ ສະໜັບສະໜຸນທົ່ວກຸ່ມບໍລິສັດທາງດ້ານການຍຸດທະສາດ, ການຄຸ້ມຄອງການເງິນ, ການບໍລິຫານດ້ານການຄ້າ ແລະ ວິຊາການ, ການຄຸ້ມຄອງຄວາມສ່ຽງ, ການພົວພັນກັບນັກລົງທຶນ, ການພັດທະນາແບບຍືນຍົງ ແລະ ການສື່ສານພົວພັນຂອງບໍລິສັດ, ຊັບພະຍາກອນມະນຸດ, ການຄຸ້ມຄອງ ແລະ ການລາຍງານ.

ໜ່ວຍງານທຸລະກິດຂອງ ແພນອອສ ເອເຊຍ ມີສຳນັກງານເຂດພາກພື້ນຕັ້ງຢູ່ນະຄອນຫຼວງວຽງຈັນ. ໜ່ວຍງານທຸລະກິດຂອງບໍລິສັດ ໃນເຂດອາຊີ ຮັບຜິດຊອບການດຳເນີນງານຢູ່ລາວ ແລະ ໃຫ້ການສະໜັບສະໜຸນແກ່ການຈັດຕັ້ງປະຕິບັດຍຸດທະສາດການພັດທະນາເສດຖະກິດ ພາຍໃນລາວ ແລະ ໃນເຂດພາກພື້ນ.

ກ່ຽວກັບບົດລາຍງານສະບັບນີ້

ບົດລາຍງານສະບັບນີ້ ມີຂໍ້ມູນການຜະລິດ, ທຸລະກິດ ແລະ ຂໍ້ມູນກ່ຽວກັບການພັດທະນາແບບຍືນຍົງ ສຳລັບປີ 2017. ບົດລາຍງານນີ້ ໄດ້ສັງລວມຂໍ້ມູນຈາກ ບົດທົບທວນການດຳເນີນທຸລະກິດ ແລະ ບົດລາຍງານການພັດທະນາແບບຍືນຍົງ ຂອງ ບໍລິສັດ ແພນອອສ 2017 (ສາມາດເບິ່ງຂໍ້ມູນໄດ້ຢູ່ເວັບໄຊ້ www.panaust.com.au/reports) ເຊິ່ງໄດ້ສະເໜີຂໍ້ມູນໄລຍະສາມປີ, ໂດຍກະກຽມຕາມຫຼັກການແນະນຳຂອງໂຄງร่างການລາຍງານລະດັບໂລກ ແລະ ໂຄງร่างການລາຍງານການພັດທະນາແບບຍືນຍົງຕາມຫຼັກ ຈີ 4 (Global Reporting Initiative G4 Core Sustainability Reporting Guidelines), ແລະ ຮັບການຢັ້ງຢືນຈາກພາກສ່ວນທີ່ສາມກ່ອນການຈັດພິມ.

ບໍລິສັດ ແພນອອສ ນຳໃຊ້ຂັ້ນຕອນການກຳນົດທີ່ມີສາລະສຳຄັນ ເນັ້ນໜັກໃສ່ການລາຍງານກ່ຽວກັບຄວາມຍືນຍົງ ເພື່ອກຳນົດບັນຫາທີ່ເປັນສິ່ງສຳຄັນຕໍ່ບໍລິສັດ ແພນອອສ ແລະ ຜູ້ມີສ່ວນຮ່ວມຂອງບໍລິສັດ; ບັນຫາເຫຼົ່ານັ້ນ ໄດ້ຮັບການຍົກໃຫ້ເຫັນ ທັງຢູ່ໃນບົດທົບທວນການດຳເນີນທຸລະກິດ ແລະ ບົດລາຍງານແບບຍືນຍົງ ຂອງ ບໍລິສັດ ແພນອອສ 2017 ແລະ ບົດລາຍງານຂອງບໍລສັດ ພູເບ້ຍ ມາຍນິງ ຈຳກັດ ສະບັບນີ້.

ໂຮງງານຂຸດຄົ້ນ-ປຸງແຕ່ງ ທອງ-ຄຳ ພູຄຳ,
ໂຮງງານຂຸດຄົ້ນ-ປຸງແຕ່ງ ທອງ-ຄຳ ບ້ານຫ້ວຍຊາຍ,
ຫ້ອງການວຽງຈັນ
ລາວ
ໄດ້ຮັບໃບອະນຸຍາດ
ດຳເນີນການສຳຫຼວດ
ມຽນມ້າ
ໂຄງການຂຸດຄົ້ນ-ປຸງແຕ່ງ
ທອງ-ຄຳ ຟຣິດາ ຣິເວີ
ປາປົວ ນິວ ກີນີ
ຫ້ອງການ
ບຣິສເບີນ
ອົດສະຕຣາລີ

ໂຮງງານຜະລິດ-ປຸງແຕ່ງຂອງໂຮງງານຂຸດຄົ້ນ-ປຸງແຕ່ງ ບ້ານຫ້ວຍຊາຍເຊິ່ງມີວິງຈອບການ ບິດແຮ່ຢູ່ດ້ານຫຼັງ

ສາລະບານ

ຂໍ້ມູນຫຍໍ້ກ່ຽວກັບບໍລິສັດ	1
ຂໍ້ມູນສຳຄັນໃນປີ 2017	5
ບົດປະກອບຄຳເຫັນຂອງປະທານບໍລິສັດ	7
ການປະກອບສ່ວນທາງດ້ານການເງິນໃຫ້ແກ່ ປະເທດລາວ	10
ການທົບທວນດ້ານການດຳເນີນງານ	11
ການພັດທະນາຊຸມຊົນ ແລະ ສາຍພົວພັນກັບຊຸມຊົນ	13
ການປະຕິບັດວຽກງານສິ່ງແວດລ້ອມ	15
ສຸຂະພາບ ແລະ ຄວາມປອດໄພ	17
ພະນັກງານຂອງພວກເຮົາ	19

ຂໍ້ມູນສຳຄັນໃນປີ 2017

90,363 t

ໂລຫະທອງທີ່ຜະລິດຈາກແຮ່ເຂັ້ມຂຸ້ນ

US$ 90.26 ລ້ານ

ລ້ານການປະກອບສ່ວນໂດຍກົງ ໃຫ້ລັດຖະບານລາວໃນປີ

3.5 ສ່ວນຮ້ອຍ

ຂອງ GDP ລາວມາຈາກການດຳ ເນີນງານຂອງບໍລິສັດ ພູເບ້ຍ ມາຍ ນິງ ຈຳກັດໃນປີ 2017

US$1.97 ລ້ານ

ລ້ານໄດ້ລົງທຶນເຂົ້າໃນໂຄງລ່າງພື້ນ ຖານ ແລະ ການບຳລຸງຮັກສາເສັ້ນ ທາງຫຼວງ

US$1,041,799 **ລາຍໄດ້ທີ່ສ້າງແກ່ຊຸມຊົນທ້ອງ ຖິ່ນ ໂດຍຜ່ານການຊື້ຜັກ, ນ້ຳດື່ມ, ໄຂ່, ຖົ່ງ, ໝາກໄມ້ ແລະ ປາ**



ອັດຕາ GDP ຂອງລາວ ຈາກການດຳເນີນ ງານຂອງບໍລິສັດ ພູເບ້ຍ ມາຍນິງ ຈຳກັດ 2015-2017



192,530 ອອນ

ອອນການຜະລິດຄຳໃນແຮ່ເຂັ້ມຂຸ້ນ

1,377,376 ອອນ

ອອນການຜະລິດເງິນໃນແຮ່ເຂັ້ມຂຸ້ນ ແລະ ເງິນຄຳແທ່ງປະສົມ

91 ສ່ວນຮ້ອຍ

ພະນັກງານລາວ (ຄິດເປັນສ່ວນຮ້ອຍ ຂອງຈຳນວນແຮງງານປີ 2017)

US$118,000

ການບໍລິຈາກ ແລະ ການສະໜັບສະໜູນທັງໝົດ (ໂດຍຜ່ານການບໍລິຈາກເປັນເງິນສົດ ແລະ ປະກອບສ່ວນທາງດ້ານວັດຖຸປັດໃຈ)

16

ໂຄງການພັດທະນາຊຸມຊົນຂະໜາດນ້ອຍໄດ້ຮັບການຈັດຕັ້ງປະຕິບັດໂດຍຜ່ານທຶນພັດທະນາຊຸມຊົນ

$175,102*

ການລົງທຶນທັງໝົດເຂົ້າໃນຊຸມຊົນ (ໂດຍຜ່ານທຶນພັດທະນາຊຸມຊົນ)

ການຜະລິດທອງ
2015-2017



ກອງແຮບຸ່ໂຮງງານຂຸດຄົ້ນ-ປຸງແຕ່ງ ທອງ-ຄຳ ພູຄຳ

* ເນື່ອງຈາກມີການປ່ຽນແປງຂອງໂຄງສ້າງຂອງພາກລັດທີ່ຄຸ້ມຄອງໂຄງການພັດທະນາຊຸມຊົນ ແລະ ຄວາມຄາດຫວັງທີ່ຕ່າງກັນຂອງພວກເຂົາກ່ຽວກັບການຊີ້ນຳ, ການອະນຸມັດຮັບຮອງໂຄງການໄດ້ລ່າຊ້າຈົນເຖິງເດືອນກັນຍາປີ 2017. ງົບປະມານພັດທະນາຊຸມຊົນຂອງປີ 2017 ແມ່ນໄດ້ສືບຕໍ່ໃນປີ 2018

ບົດປະກອບຄຳເຫັນຂອງປະທານບໍລິສັດ

ທີ່ບໍລິສັດ ພູເບ້ຍ ມາຍນິງ, ພວກເຮົາ ກຳນົດຄວາມສຳເລັດຢ່າງຮອບດ້ານ.

ຄວາມສຳເລັດຮຽກຮ້ອງຄວາມເປັນເລີດທັງດ້ານການຜະລິດທອງ ແລະ ຄຳອັນເປັນຮູບປະທຳ ພ້ອມກັບອົງປະກອບທັງໝົດຂອງທຸລະກິດ ເຊິ່ງລວມມີພະນັກງານຂອງພວກເຮົາ, ຄວາມປອດໄພ, ການຄຸ້ມຄອງດ້ານສິ່ງແວດລ້ອມ, ການພົວພັນນຳຊຸມຊົນ, ການມີສ່ວນຮ່ວມຂອງລັດຖະບານ, ແລະ ຜົນຕອບແທນຕໍ່ຜູ້ຖືຮຸ້ນ. ພວກເຮົາເຫັນວ່າ ການມຸ່ງສູ່ຜົນໄດ້ຮັບຂອງທຸລະກິດ ແລະ ຄວາມຍືນຍົງແມ່ນສ້າງຜົນປະ�โຫຍດບົນພື້ນຖານສິ່ງເສີມເຊິ່ງກັນ ແລະ ກັນຢ່າງສະໝ່ຳສະເໝີ; ຄວາມສຳເລັດໃນໜຶ່ງຂົງເຂດສາມາດສ້າງຄວາມເປັນເລີດໃນອີກດ້ານອື່ນ. ວິທີການນີ້ແມ່ນໄດ້ປູກຝັງໃນວິໄສທັດ ແລະ ຄຸນນະທຳຂອງບໍລິສັດ ໂດຍຜ່ານ ແນວທາງຂອງແພນອອສ ເຊິ່ງແມ່ນຫຼັກປະພຶດປະຕິບັດຂອງບໍລິສັດ.

ບໍລິສັດ ພູເບ້ຍ ມາຍນິງ ມ້ວນທ້າຍປີ 2017 ດ້ວຍຄວາມຈົບງາມ, ໂດຍມີການດຳເນີນງານ, ສະຖິຕິດ້ານຄວາມປອດໄພ ແລະ ຜົນໄດ້ຮັບດ້ານຄ່າໃຊ້ຈ່າຍທີ່ດີເລີດ. ການຜະລິດທອງ ແລະ ຄຳຈາກການດຳເນີນງານຂອງພວກເຮົາແມ່ນເຂັ້ມແຂງ. ການຜະລິດໂລຫະເກີນແຜນທີ່ວາງໄວ້ ແລະ ບັນລຸສະຖິຕິ, ໂດຍບັນລຸສະຖິຕິຜະລິດທອງປະຈຳປີໄດ້ 90,363 ໂຕນ. ການຜະລິດໂລຫະປະຈຳປີລວມມີ ຄຳ 192,530 ອອນ ແລະ ເງິນ 1,377,376 ອອນ. ສິ່ງສຳຄັນ, ພວກເຮົາໄດ້ບັນລຸຜົນໄດ້ຮັບທີ່ພົ້ນເດັ່ນເຫຼົ່ານີ້ຢ່າງປອດໄພ, ມີຄວາມຍືນຍົງ ແລະ ມີການປະສານສົມທົບກັບ ຊຸມຊົນເຈົ້າພາບ ແລະ ລັດຖະບານ.

ຄວາມສຳເລັດໃນບໍລິສັດ ພູເບ້ຍ ມາຍນິງ ສາມາດສ້າງໄດ້ຈາກສອງອົງປະກອບພື້ນຖານ - ໂຄງສ້າງແຮ່ທີ່ມີຄວາມອຸດົມຮັ່ງມີໃຕ້ພື້ນດິນ, ແລະ ພະນັກງານຜູ້ທີ່ປົດລັອກຄວາມອຸດົມຮັ່ງມີນັ້ນ. ຖ້າສ່ວນໜຶ່ງຫາກບໍ່ພຽງພໍ ສ່ວນອື່ນຈະຕ້ອງມີຢ່າງຫຼວງຫຼາຍເພື່ອເຕີມເຕັມໃຫ້ອີກສ່ວນອື່ນ ເພື່ອໃຫ້ປະກົດຜົນ. ໃນບໍລິສັດ ພູເບ້ຍ ມາຍນິງ, ໂຄງສ້າງແຮ່ຂອງພວກເຮົາ ແມ່ນມີຄຸນນະພາບຕ່ຳຫຼາຍ ແລະ ມີວິທີການປຸງແຕ່ງແຮ່ທາດອັນທ້າທາຍກວ່າແຫ່ງອື່ນຫຼາຍ. ຄວາມສຳເລັດຂອງພວກເຮົາແມ່ນໄດ້ມາຈາກການຂັບເຄື່ອນຂອງພະນັກງານຢ່າງແທ້ຈິງ.

ໃນເມື່ອການດຳເນີນງານຂອງບໍລິສັດ ພູເບ້ຍ ມາຍນິງ ເຕີບໃຫຍ່ແລ້ວ, ພວກເຮົາໄດ້ສຸມຄວາມເອົາໃຈໃສ່ຂອງພວກເຮົາ ໃນການພັດທະນາພະນັກງານຂອງພວກເຮົາເພີ່ມຂຶ້ນ ເພື່ອຕອບສະໜອງຕໍ່ຄວາມມຸ່ງມາດປາດຖະໜາອັນຕໍ່ເນື່ອງຂອງພວກເຮົາ ໃນການສ້າງຄວາມກ້າວໜ້າດ້ານວິຊາການ ແລະ ວິທີການກ່ຽວຂ້ອງ.

ພວກເຮົາມີຄວາມມຸ່ງໝັ້ນໄລຍະຍາວເພື່ອສົ່ງເສີມການຫັນມານຳໃຊ້ແຮງງານທ້ອງຖິ່ນເພີ່ມຂຶ້ນ ໂດຍຜ່ານການຝຶກອົບຮົມ ແລະ ການພັດທະນາສີມືແຮງງານ. ພວກເຮົາໄດ້ຮັກສາແຮງງານລາວ 91 ສ່ວນຮ້ອຍຂອງພະນັກງານທັງໝົດໃນປະຈຸບັນຕາມລະດັບດຽວກັບປີ 2016 ເຊິ່ງຈະເພີ່ມຂຶ້ນເປັນ 93 ສ່ວນຮ້ອຍໃນປີ 2018. ຜົນໄດ້ຮັບນີ້ໄດ້ຮັບການສະໜັບສະໜຸນຈາກໂຄງການຊ່າງຝຶກຫັດ, ເຊິ່ງຖືກຕ້ອງຕາມມາດຕະຖານຂອງຄຸນນະວຸດການຝຶກອົບຮົມຊ່າງຝຶກຫັດລັດຄິດສະແລນ ຂອງ ອິດສະຕາລີ ແລະ ຜ່ານການພັດທະນາແຮງງານທ້ອງຖິ່ນຂອງພວກເຮົາຕາມມາດຕະຖານການປະຕິບັດງານດຽວກັບແຮງງານຕ່າງປະເທດ.

ໃນເດືອນ ທັນວາ, ນັກສຶກສາຂອງບໍລິສັດ ໄດ້ສຳເລັດໂຄງການຊ່າງຝຶກຫັດ ແລະ ໄດ້ບັນຈຸເຂົ້າຕຳແໜ່ງນາຍຊ່າງເຕັມເວລາ ພາຍໃນການດຳເນີນງານຂອງພວກເຮົາ. ນັກສຶກສາແຕ່ລະຄົນເປັນຕົວແທນມໍລະດົກທີ່ດີ ແລະ ຍາວນານຈາກການປະກອບສ່ວນຂອງບໍລິສັດຢູ່ລາວ.

ໃນອີກໂຄງການຕ່າງຫາກ, ໂຄງການພັດທະນາພະນັກງານລະດັບຄວບຄຸມຂອງພວກເຮົາ ແນໃສ່ພະນັກງານທີ່ມີຄວາມສາມາດສູງ ແລະ ຊ່ວຍເຫຼືອໃຫ້ພວກເຂົາພັດທະນາທັກສະຄວາມເປັນຜູ້ນຳ ໃນຂົງເຂດການວາງແຜນ ແລະ ຍຸດທະສາດ, ການຄຸ້ມຄອງການປະຕິບັດງານ, ການແກ້ໄຂບັນຫາ, ການສື່ສານ, ແລະ ການເຈລະຈາ. ນັກສຶກສາຈົບໃນປີ 2017 ໃນໂຄງການເຈັດປີ ໄດ້ເຂົ້າຮ່ວມພິທີຮັບໃບປະກາດ ຢູ່ໂຮງແຮມ ຄຣາວ ພລາຊາ, ນະຄອນຫຼວງວຽງຈັນ. ຜົນສຳເລັດຂອງໂຄງການນີ້ແມ່ນສະທ້ອນໃຫ້ເຫັນເຖິງການສົ່ງເສີມພະນັກງານລາວ 380 ຄົນໃນຕຳແໜ່ງຜູ້ນຳນັບແຕ່ປີ 2014, ໃນປີ 2017 ມີພະນັກງານ 85 ຄົນໄດ້ເລື່ອນຕຳແໜ່ງ.

ສິ່ງສຳຄັນ ແມ່ນການປະຕິບັດງານຂອງພວກເຮົາໃນການດຳເນີນທຸລະກິດໄດ້ປັບປຸງໃນໄລຍະຂອງການມີສ່ວນຮ່ວມຂອງກຳລັງແຮງງານລາວເພີ່ມຂຶ້ນ. ນີ້ໄດ້ເສີມຂະຫຍາຍຄວາມມຸ່ງໝັ້ນຂອງພວກເຮົາ ເພື່ອນຳໃຊ້ແຮງງານທ້ອງຖິ່ນຂອງພວກເຮົາ, ຮັບປະກັນໃຫ້ພວກເຂົາໄດ້ກ້າວຕາມທິດທາງໃນຕໍ່ໜ້າ ຈາກການເປັນພະນັກງານຂອງບໍລິສັດ ພູເບ້ຍ ມາຍນິງ.

ໃນປີ 2017, ບໍລິສັດ ພູເບ້ຍ ມາຍນິງໄດ້ເລີ່ມໂຄງການ ການນຳພາຕາມແນວທາງຂອງບໍລິສັດ ແພນອອສ, ເປັນໂຄງການພັດທະນາການນຳພາທີ່ອອກແບບ ແລະ ອຳນວຍຄວາມສະດວກພາຍໃນ ເຊິ່ງສົ່ງເສີມຮູບແບບການສ້າງຄວາມສາມາດດ້ານການນຳພາແບບຂອງແພນອອສ ແລະ ເຊື່ອມສານອົງປະກອບສຳຄັນຂອງ ແນວທາງຂອງບໍລິສັດ ແພນອອສ, ວິໄສທັດ ແລະ ຄຸນນະທຳ, ແລະ ຍຸດທະສາດ. ພາຍໃຕ້ໂຄງການນີ້, ບົດບາດການນຳພາຂອງແຕ່ລະຄົນ ແມ່ນໄດ້ຮັບຄຳຕິຊົມຈາກຫົວໜ້າ, ເພື່ອນຮ່ວມງານ ແລະ ພະນັກງານໃນຄວາມຮັບຜິດຊອບຂອງຕົນ. ໂຄງການດັ່ງກ່າວໄດ້ສະໜອງຂໍ້ມູນລົງເລິກດ້ານດີຂອງການນຳພາ ແລະ ກຳນົດຂົງເຂດສຳລັບການສະທ້ອນເບິ່ງຕົນເອງ ແລະ ໂອກາດເພື່ອການປັບປຸງ.

ການຮັກສາຄວາມປອດໄພຂອງພະນັກງານແມ່ນຫຼັກການຕົ້ນຕໍ ທີ່ຄະນະນຳທຸກຄົນໃນທຸລະກິດຂອງພວກເຮົາເຊື່ອຖື ແລະ ຕ້ອງປະຕິບັດຢ່າງຈິງຈັງ. ພວກເຮົາສະແດງຄວາມມຸ່ງໝັ້ນນີ້ ໂດຍການບັນລຸຜົນດ້ານຄວາມປອດໄພອັນພົ້ນເດັ່ນຢ່າງສະໝ່ຳສະເໝີ - ປີ 2017 ແມ່ນບໍ່ແຕກຕ່າງເຊັ່ນດຽວກັນ. ມາເຖິງທ້າຍປີ, ອັດຕາຄວາມຖີ່ການບາດເຈັບທີ່ບັນທຶກໄດ້ທັງໝົດຂອງບໍລິສັດ ພູເບ້ຍ ມາຍນິງ (TRIFR) ແມ່ນ 0.83. ຜົນໄດ້ຮັບນີ້ແມ່ນດີກວ່າອັດຕາສະເລັ່ຍຂອງອຸດສາຫະກຳ ແລະ ມີການປັບປຸງດີຂຶ້ນ 28 ສ່ວນຮ້ອຍ ໃນຜົນດ້ານຄວາມປອດໄພຂອງບໍລິສັດໃນປີ 2016. ຜົນການດຳເນີນດ້ານຄວາມປອດໄພຂອງພວກເຮົາສະທ້ອນເຖິງຄວາມມຸ່ງໝັ້ນຂອງພວກເຮົາເພື່ອບັນລຸຈຸດປະສົງຄວາມປອດໄພໂດຍປາດສະຈາກການບາດເຈັບ ແລະ ຄວາມສຳເລັດຂອງໂຄງການຄວາມປອດໄພຕາມເປົ້າໝາຍ ເຊິ່ງສຸມໃສ່ຈຸດສຸມສຳຄັນ ແລະ ແຜນຕົວຊີ້ວັດການນຳພາ.

ຕະຫຼອດປີນີ້, ແຜນການຕິດຕາມການສຳຫຼວດຄວາມຜູກພັນຂອງພະນັກງານໃນປີ 2013 ໄດ້ສ້າງຜົນທີ່ປັບປຸງດີຂຶ້ນໃນດ້ານຄວາມປອດໄພ. ອັດຕາຄວາມພໍໃຈຂອງພະນັກງານຕໍ່ບໍລິສັດໂດຍລວມແມ່ນ 92 ສ່ວນຮ້ອຍ ດີກວ່າຜົນຂອງປີ 2013 ຕື່ມອີກ 11 ສ່ວນຮ້ອຍ, ແລະ ສູງກວ່າມາດຕະຖານການຈັດລະດັບຄວາມພໍໃຈຂອງຂະແໜງຊັບພະຍາກອນທຳມະຊາດທີ່ມີແຕ່ 87 ສ່ວນຮ້ອຍ (ຈາກບັນດາບໍລິສັດຂຸດຄົ້ນບໍ່ແຮ່ຂະໜາດກາງ ແລະ ຂະໜາດໃຫຍ່ ທີ່ມີການດຳເນີນລະດັບສູງ). ຜົນນີ້ຍັ້ງຢືນຈາກຄວາມພິຈາລະນາຮອບດ້ານຂອງວັດທະນະທຳດ້ານຄວາມປອດໄພຂອງບໍລິສັດ ແລະ ຄວາມເຊື່ອໝັ້ນຂອງພະນັກງານວ່າ ບໍລິສັດ ພູເບ້ຍ ມາຍນິງເອົາໃຈໃສ່ຄວາມປອດໄພ, ສຸຂະພາບ ແລະ ຄວາມເປັນຢູ່ຂອງພະນັກງານຢ່າງຈິງໃຈແທ້ຈິງ.

ບໍລິສັດ ພູເບ້ຍ ມາຍນິງໄດ້ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດໂດຍກົງຢ່າງຫຼວງຫຼາຍທັງໃນລະດັບຊຸມຊົນ ແລະ ລະດັບຊາດໃນປີ 2017. The Economist Intelligence Unit ໄດ້ຄາດຄະເນວ່າກິດຈະການຂອງບໍລິສັດ ພູເບ້ຍ

ບົດປະກອບຄຳເຫັນຂອງປະທານບໍລິສັດ

ປະກອບສ່ວນຫຼາຍກ່ວາ 3.5 ສ່ວນຮ້ອຍຂອງລວມຍອດຜະລິດຕະພັນພາຍໃນຂອງປະເທດ ແລະ ກວມເອົາ 20 ສ່ວນຮ້ອຍຂອງມູນຄ່າການສົ່ງອອກທັງໝົດໃນປີ ເຊິ່ງເທົ່າກັບ $3,654 ລ້ານໂດລາສະຫະລັດ. ບໍລິສັດໄດ້ປະກອບສ່ວນພັນທະສ່ວຍສາອາກອນ ແລະ ຄ່າຊັບພະຍາກອນແຮ່ທາດຫຼາຍກວ່າ $90 ລ້ານ ເຂົ້າລາຍຮັບຂອງລັດຖະບານແຫ່ງ ສປປ ລາວ, ແລະ ຈ່າຍຜູ້ສະໜອງສິນຄ້າ ແລະ ການບໍລິການລວມທັງໝົດ $176 ລ້ານ. ມາຮອດປະຈຸບັນ, ການປະກອບສ່ວນຂອງບໍລິສັດຕໍ່ລາຍຮັບຂອງລັດຖະບານລາວຫຼາຍກວ່າ $600 ລ້ານໂດລາສະຫະລັດ. ບໍລິສັດໄດ້ລົງທຶນເຂົ້າໃນເສດຖະກິດຂອງລາວລວມທັງໝົດຫຼາຍກ່ວາ $1.41 ຕື້.

ບໍລິສັດສືບຕໍ່ສ້າງຜົນປະໂຫຍດອັນສຳຄັນຕໍ່ຊຸມຊົນທີ່ຢູ່ໃກ້ເຂດດຳເນີນງານຂອງພວກເຮົາ ໂດຍມີການຈ້າງພະນັກງານທ້ອງຖິ່ນທາງກົງ ແລະ ຈັດຕັ້ງປະຕິບັດໂຄງການພັດທະນາຊຸມຊົນ. 16 ໂຄງການພັດທະນາຊຸມຊົນຂະໜາດນ້ອຍໄດ້ຈັດຕັ້ງປະຕິບັດຢູ່ໃນ 18 ຊຸມຊົນທີ່ຢູ່ໃກ້ການດຳເນີນງານຂອງພວກເຮົາທີ່ສຸດ. ໂຄງການລວມມີການພັດທະນາການສຶກສາ, ສາທາລະນະສຸກ, ການພັດທະນາດ້ານກະສິກຳ, ໂຄງການທຸລະກິດຂະໜາດນ້ອຍ, ການເງິນຈຸລະພາກ ແລະ ໂຄງລ່າງພື້ນຖານ. ແຜນພັດທະນາຊຸມຊົນໃນປີ ແມ່ນໄດ້ອອກແບບຄືນຕາມໄລຍະຫ້າປີ ເພື່ອສະໜັບສະໜຸນຊຸມຊົນ ພາຍຫຼັງການປິດບໍ່.

ໃນປີ 2017, ພວກເຮົາໄດ້ເລີ່ມວາງແຜນສຳລັບການຂ້າມຜ່ານທີ່ສຳຄັນເພື່ອການປິດບໍ່ຢູ່ທັງສອງໂຮງງານ. ວິທີການຂອງພວກເຮົາໃນການວາງແຜນການປິດບໍ່ແມ່ນບໍ່ຕ່າງຫຍັງຈາກໂຄງການໃໝ່. ໃນການພັດທະນາບົດວິພາກເສດຖະກິດ-ເຕັກນິກສຳລັບກິດຈະກຳການປິດບ່ ແລະ ຈັດຕັ້ງການປຶກສາຫາລືກັບຜູ້ມີສ່ວນກ່ຽວຂ້ອງຕົ້ນຕໍພາຍໃນ ແລະ ພາຍນອກແຕ່ຫົວທີ, ພວກເຮົາກຳລັງຕັ້ງໝັ້ນວ່າ ພວກເຮົາຈະມຸ່ງໝັ້ນສ້າງມູນມໍ ລະດົກທາງບວກອັນຍາວນານໄວ້ຢູ່ລາວ. ນີ້ຍັງຢັ້ງຢືນໃຫ້ເຫັນເຖິງຄວາມຕັ້ງໃຈຂອງພວກເຮົາ ໃນຖານະເປັນຜູ້ນຳໜ້າດ້ານການພັດທະນາແບບຍືນຍົງໃນຂະແໜງບໍ່ແຮ່. ສຳຄັນທີ່ສຸດແມ່ນ ພວກເຮົາໄດ້ອອກແບບຄືນ ໂຄງການພັດທະນາຊຸມຊົນຂອງພວກເຮົາທີ່ຮັບຮູ້ໃນລະດັບສາກົນເພື່ອດຳເນີນງານໃນໄລຍະຫ້າປີ, ໂດຍແນໃສ່ບັນລຸເປົ້າໝາຍການພັດທະນາແບບຍືນຍົງຂອງສະຫະປະຊາຊາດ ໃນສາມບ້ານທີ່ຢູ່ໃກ້ເຂດດຳເນີນງານຂອງພວກເຮົາ.

ໃນເດືອນມີນາ, ບໍລິສັດ ພູເບ້ຍ ມາຍນິງ ແມ່ນໄດ້ຮັບກຽດປະດັບຫຼຽນກາແຮງງານຈາກລັດຖະບານລາວຈາກການປະກອບສ່ວນຍົກລະດັບທາງເລກທີ 12 ຢູ່ ແຂວງ ຄຳມ່ວນ, ເສັ້ນທາງເຊື່ອມຕໍ່ອັນສຳຄັນລະຫວ່າງລາວ ແລະ ຫວຽດນາມຕາມເສັ້ນທາງຂົນສົ່ງແຮ່ຂອງ ບໍລິສັດ. ພວກເຮົາພາກພູມໃຈທີ່ໄດ້ຮັບຫຼຽນດັ່ງກ່າວ ເຊິ່ງຮັບຮູ້ເຖິງຄວາມມຸ່ງໝັ້ນຂອງພວກເຮົາອັນຕໍ່ເນື່ອງໃນການພັດທະນາ ແລະການສົ່ງເສີມເສດຖະກິດ-ສັງຄົມຂອງລາວ.

ຕາງໜ້າໃຫ້ແກ່ບໍລິສັດ ພູເບ້ຍ ມາຍນິງ ແລະ ຄະນະບໍລິຫານຂອງບໍລິສັດ, ຂ້າພະເຈົ້າຂໍສະແດງຄວາມຂອບໃຈມາຍັງລັດຖະບານແຫ່ງ ສປປ ລາວ, ພະນັກງານຂອງພວກເຮົາທຸກຄົນ, ຄູ່ຮ່ວມທຸລະກິດຂອງພວກເຮົາ ແລະ ທຸກຄົນທີ່ກ່ຽວຂ້ອງພາຍໃນບໍລິສັດ ພູເບ້ຍ ມາຍນິງ ສຳລັບການສະໜັບສະໜຸນອັນຕໍ່ເນື່ອງໃນປີ 2017.

ປະທານບໍລິສັດ, ທ່ານ ຈັນເພັງ ບຸນນະຜົນ

ອາຈານ ກັບ ນັກຮຽນຢູ່ໂຮງຮຽນປະຖົມບ້ານພອນ ແກ້ວ ໃນປະເທດລາວ

ການປະກອບສ່ວນດ້ານການເງິນ ໃຫ້ແກ່ລາວ

ລາຍການ	US$ ລ້ານ		
ການປະກອບສ່ວນ	**2015**	**2016**	**2017**
ອາກອນລາຍໄດ້ສ່ວນບຸກຄົນ (ອາກອນເງິນເດືອນ)	4.69	4.24	4.16
ຄ່າທຳນຽມບໍລິການນຳເຂົ້າ	2.78	1.74	1.70
ອາກອນຄ່າທາງ	4.26	4.48	4.70
ອາກອນກຳໄລ (ອາກອນລາຍຮັບ)*	1.18	16.19	25.33
ຄ່າພາສີຊັບພະຍາກອນແຮ່ທາດ	37.36	35.55	43.81
ຄ່າສຳປະທານ	0.06	0.06	0.06
ອາກອນມູນຄ່າເພີ່ມຈ່າຍລ່ວງໜ້າ*	14.22	12.06	12.70
ອາກອນມູນຄ່າເພີ່ມຫັກຈາກອາກອນກຳໄລ**	(14.22)	(12.06)	(12.70)
ພາສີນ້ຳມັນເຊື້ອໄຟຈ່າຍລ່ວງໜ້າ	7.59	9.87	13.65
ພາສີນ້ຳມັນເຊື້ອໄຟຫັກຈາກອາກອນກຳໄລ**	(7.59)	(9.87)	(13.65)
ຄ່າທຳນຽມຜ່ານແດນຈ່າຍລ່ວງໜ້າ	0.90	1.51	1.41
ຄ່າທຳນຽມຜ່ານແດນຫັກຈາກອາກອນກຳໄລ**	(0.90)	(1.51)	(1.41)
ເງິນປັນຜົນ	4.80	4.50	10.50
ການປະກອບສ່ວນທັງໝົດ	**55.14**	**66.76**	**90.26**
ການປະກອບສ່ວນສະສົມທັງໝົດ	**466,554**	**533,311**	**623,568**
ລາຄາທອງ (US$/lb)	**2.38**	**2.25**	**2.84**

* ໃນປີ 2016, ບໍລິສັດ ໄດ້ເລີ່ມຍຸດທະສາດເພື່ອຫຼຸດຜ່ອນການຊຳລະກຳໄລລ່ວງໜ້າໂດຍການຫັກຈາກຄ່າຊັບພະຍາກອນແຮ່ທາດ ແລະ ການຊຳລະອື່ນໆໃຫ້ລັດຖະບານລາວ.
** ອີງຕາມສັນຍາ , ບໍລິສັດ ພູເບ້ຍ ມາຍນິງ ຈຳກັດ ແມ່ນຖືກຍົກເວັ້ນອາກອນມູນຄ່າເພີ່ມ ແລະ ພາສີການນຳເຂົ້າທຸກປະເພດ ແລະ ອາກອນຊົມໃຊ້ ແລະ ເຫຼົ່ານີ້ແມ່ນຖືກຫັກລົບກັບອາກອນກຳໄລ ທີ່ເກີດຂຶ້ນໃນປີດັງກ່າວ; ສຳລັບປີ 2014 ແລະ 2015, ການມອບອາກອນເຫຼົ່ານີ້ ໄດ້ເກີນອາກອນກຳໄລທີ່ຕ້ອງຊຳລະ ແລະ ສະນັ້ນ ຈຶ່ງຖືວ່າເປັນການມອບອາກອນກຳໄລລ່ວງໜ້າ.

ການປະກອບສ່ວນໂດຍກົງເຂົ້າໃນການ

ພັດທະນາລາວ (ຕົວເລກສະສົມ) 2015-2017



ການປະກອບສ່ວນໂດຍກົງເຂົ້າໃນການ

ພັດທະນາລາວ (ຕົວເລກປະຈຳປີ) 2015-2017



ການທົບທວນດ້ານການດຳເນີນງານ

ໃນປີ 2017, ການຜະລິດທອງ ແລະ ຄຳຢູ່ໂຮງງານ ພູຄຳ ແລະ ໂຮງງານ ບ້ານ ຫ້ວຍຊາຍແມ່ນເຂັ້ມແຂງ. ໂຮງງານໄດ້ຮັກສາຜົນໄດ້ຮັບດ້ານການຜະລິດ ແລະ ການປະຫຍັດຄ່າໃຊ້ຈ່າຍຕະຫຼອດປີຢ່າງສະໝ່ຳສະເໝີ.

1 ສ່ວນຮ້ອຍ	10 ສ່ວນຮ້ອຍ	3 ສ່ວນຮ້ອຍ
ການເພີ້ມຂຶ້ນດ້ານການຜະລິດທອງ ທຽບໃສ່ປີ 2016 (ໂຮງງານ ພູຄຳ)	ການເພີ້ມຂຶ້ນດ້ານການຜະລິດເງິນ ທຽບໃສ່ປີ 2016 (ໂຮງງານ ພູຄຳ)	ການເພີ້ມຂຶ້ນດ້ານຄຸນນະພາບຂອງທອງ ທຽບໃສ່ປີ 2016 (ໂຮງງານພູຄຳ)

ໂຮງງານຜະລິດທອງ-ຄຳ ພູຄຳ

ໂຮງງານ ພູຄຳ ເປັນແຫຼ່ງສະໜອງລາຍຮັບທີ່ສຳຄັນຂອງ ບໍລິສັດ ພູເບ້ຍ ມາຍນິງ. ໃນປີ 2017 ໂຮງງານໄດ້ສ້າງສະຖິຕິການຜະລິດທອງສູງສຸດທີ່ເຄີຍມີມາ.

ຜົນການຜະລິດ

ໂຮງງານ ພູຄຳ ເປັນແຫຼ່ງສະໜອງລາຍຮັບທີ່ສຳຄັນຂອງ ບໍລິສັດ ພູເບ້ຍ ມາຍນິງ. ໃນປີ 2017 ໂຮງງານໄດ້ສ້າງສະຖິຕິການຜະລິດທອງສູງສຸດທີ່ເຄີຍມີມາ.

ຜົນການຜະລິດ

ໂຮງງານ ພູຄຳ ບັນລຸສະຖິຕິໃໝ່ປະຈຳປີໃນການປ້ອນແຮ່ເຂົ້າໂຮງງານຈຳນວນ 81.5 ສ່ວນຮ້ອຍ (2016:79.9 ສ່ວນຮ້ອຍ) ສຳລັບທອງ ໂດຍຄຸນນະພາບແຮ່ ແລະ ຄຸນນະພາບແຮ່ຍົດປັບປຸງດີຂຶ້ນ. ການຜະລິດທອງທັງໝົດບັນລຸໄດ້ 90,363 ໂຕນ, ຄຳ 76,055 ອອນ ແລະ ເງິນ 587,641 ອອນ.

ຕົ້ນທຶນ

ຕົ້ນທຶນເງິນສົດ C1* ໂດຍສະເລ່ຍ ໃນປີດັ່ງກ່າວແມ່ນ $1.18 ໂດລາສະຫະລັດ/ປອນ ພາຍຫຼັງບວກລາຍຮັບຈາກການຂາຍຄຳ-ເງິນ. ຕົ້ນທຶນໝົດບໍລິສັດ (AISC**) ແມ່ນ $1.68 ໂດລາສະຫະລັດ/ປອນ. ລາຄາທອງໂດຍສະເລ່ຍ ທີ່ໄດ້ຮັບໃນປີ 2017 ແມ່ນ $2.84 ໂດລາສະຫະລັດ/ປອນ.

ການຂຸດຄົ້ນ ແລະ ການຜະລິດ-ປຸງແຕ່ງ

ໂຮງງານໄດ້ດຳເນີນເປັນຢ່າງດີໃນປີ 2017 ເພາະການຜະລິດສືບຕໍ່ປະສົບກັບແຮ່ແຂງ ໃນຫຼາຍຊັ້ນດິນຂອງບໍ່ຂຸດຄົ້ນແບບເປີດ. ປະລິມານຂຸດຄົ້ນທັງໝົດແມ່ນ 55.5 ລ້ານໂຕນ ແລະ ສາມາດປ້ອນແຮ່ໄດ້ 19 ລ້ານໂຕນ. ແຮ່ທີ່ໄດ້ຮັບການປຸງແຕ່ງແມ່ນຫຼາຍກວ່າ 18.5 ລ້ານໂຕນ - ເພີ່ມຂຶ້ນ 15 ສ່ວນຮ້ອຍຂອງຂີດຄວາມສາມາດການຜະລິດທີ່ກຳນົດໄວ້.

ການຜະລິດທອງໃນແຮ່ເຂັ້ມຂຸ້ນປະຈຳປີ ຄາດວ່າຈະເພີ້ມຂຶ້ນສູງໃນປີ 2018 ກ່ອນເລີ່ມຕົ້ນຫຼຸດລົງປີຕໍ່ປີຈົນເຖິງການປິດບໍ່ໃນທີ່ສຸດ. ການຜະລິດຄຳໃນແຮ່ເຂັ້ມຂຸ້ນຄາດວ່າຈະຢູ່ປະມານ 65,000ອອນຕໍ່ປີ ນັບແຕ່ປີ 2017 ເປັນຕົ້ນໄປ. ປັດຈຸບັນ ບໍ່ມີຕົ້ນທຶນພັດທະນານຳໃຊ້ເພື່ອບັນລຸການເຕີບໂຕຕາມເປົ້າໝາຍນີ້. ແຫຼ່ງແຮ່ສະສົມຢູ່ໂຮງງານພູຄຳ ຊ່ວຍສະໜັບສະໜຸນອາຍຸບໍ່ປະມານ 4 ປີ ນັບຈາກທ້າຍປີ 2017.

ໂຮງງານຜະລິດຄຳ-ເງິນ ບ້ານຫ້ວຍຊາຍ

ໂຮງງານ ບ້ານຫ້ວຍຊາຍໄດ້ດຳເນີນງານເຕັມປີເປັນປີທີຫ້າໃນປີ 2017. ການດຳເນີນງານທີ່ເກີນງົບປະມານການຜະລິດ ໄດ້ບັນລຸຢູ່ໂຮງງານ ລວມທັງຕົ້ນທຶນເງິນສົດ C1 ໂດຍສະເລ່ຍ ແລະ ຕົ້ນທຶນໝົດບໍລິສັດ.

ຜົນການຜະລິດ

ໂຮງງານຜະລິດຄຳໄດ້ທັງໝົດ 116,475 ອອນ ແລະ ເງິນ 789,735 ອອນ (ຫຼອມ).

ຕົ້ນທຶນ

ຕົ້ນທຶນເງິນສົດ C1 ໂດຍສະເລ່ຍໃນການຜະລິດຄຳແມ່ນ $618 ໂດລາສະຫະລັດ/ອອນ ພາຍຫຼັງບວກລາຍຮັບຈາກການຂາຍຄຳ-ເງິນ. ຕົ້ນທຶນໝົດບໍລິສັດສຳລັບຜະລິດຄຳແມ່ນ $817 ໂດລາສະຫະລັດ/ອອນ.

ການຂຸດຄົ້ນ ແລະ ການຜະລິດ-ປຸງແຕ່ງ

ໂຮງງານ ບ້ານ ຫ້ວຍຊາຍ ໄດ້ບັນລຸການຜະລິດແຮ່ເກີນງົບປະມານໃນປີ. ປະລິມານຂຸດຄົ້ນແຮ່ລວມທັງໝົດ 14.7 (Mt) ລ້ານໂຕນ ແລະ ລວມທັງປະລິມານແຮ່ຈຳນວນ 5.3 (Mt) ລ້ານໂຕນ. ແຮ່ທີ່ໄດ້ຮັບການປຸງແຕ່ງແມ່ນຫຼາຍກວ່າ 4.9 ລ້ານໂຕນ (2016: 4.7 ລ້ານໂຕນ); ເຊິ່ງເພີ່ມຂຶ້ນ 19 ສ່ວນຮ້ອຍຂອງຂີດຄວາມສາມາດການຜະລິດທີ່ກຳນົດໄວ້.

ປະລິມານແຫຼ່ງແຮ່ສະສົມຂອງ ບ້ານ ຫ້ວຍຊາຍ ຊ່ວຍສະໜັບສະໜຸນອາຍຸບໍ່ປະມານ 4 ປີ ນັບຕັ້ງແຕ່ທ້າຍປີ 2017.

ການສຳຫຼວດໃນເຂດສຳປະທານຢູ່ ລາວ

ໃນປີ 2017, ວຽກງານຊີເຈາະຢູ່ຜາພຽງ ແລະ ພູດອກອອນໃນເຂດເນື້ອທີ່ສຳປະທານຂອງບໍລິສັດຈຳນວນ 2,600 ກິໂລຕາແມັດໄດ້ສຳເລັດ. ຜົນຈາກວຽກງານຊີເຈາະນີ້ບໍ່ເປັນເສດຖະກິດພຽງພໍເພື່ອສືບຕໍ່ການສຳຫຼວດຕາມເປົ້າໝາຍທີ່ໄດ້ວາງໄວ້.

ເປັນທີ່ໜ້າເສຍດາຍ, ການສະເໜີຂໍດັດແກ້ເຂດເນື້ອທີ່ສຳປະທານຂອງບໍລິສັດໄປຍັງລັດຖະບານລາວ ເພື່ອດຳເນີນການເຂົ້າສຳຫຼວດເຂດເນື້ອທີ່ໃໝ່ບໍ່ໄດ້ເປັນໄປຕາມແຜນການ. ກິດຈະກຳສຳຫຼວດແມ່ນໄດ້ຫຼຸດລົງ ແລະ ຈະຍັງຄົງຖືເປັນບຸລິມະສິດສຸດທ້າຍ ໃນໄລຍະລໍຖ້າການອະນຸມັດເພື່ອຂໍດັດແກ້ເຂດເນື້ອທີ່ສຳປະທານ.

ສຳລັບໂຄງການຂຸດຄົ້ນທອງ-ຄຳ KTL, ປັດຈຸບັນບໍ່ໄດ້ດຳເນີນ ຫຼື ແຜນກິດຈະກຳພາກສະໜາມ.

* ຕົ້ນທຶນ C1 ແມ່ນລະບຽບຂອງບໍລິສັດທີ່ປົກສາດ້ານພະລັງງານ ແລະ ໂລຫະທາດ (Brook Hunt Convention) ກ່ຽວກັບການລາຍງານຕົ້ນທຶນການຜະລິດໂດຍກົງ ເຊິ່ງປະກອບມີ: ສະຖານທີ່ຕັ້ງໂຮງງານ, ການຂົນສົ່ງຜະລິດຕະພັນ ແລະ ຈັດສົ່ງ, ຄ່າບຳບັດ ແລະ ກັ່ນແຮ່ ແລະ ຄ່າໃຊ້ຈ່າຍດ້ານການຕະຫຼາດ; ໂດຍອີງຕາມລາຍຈ່າຍທີ່ຈະເກີດຂຶ້ນຂອງໂລຫະທາດ ຫຼັງຈາກການຂາຍແຮ່ຖິດພັນ.

** ຕົ້ນທຶນການຜະລິດທັງໝົດ (AISC) ແມ່ນຕົ້ນທຶນ C1 ບວກກັບຕົ້ນທຶນທາງອ້ອມ (ການແບ່ງສ່ວນຕົ້ນທຶນການບໍລິການແບບລວມສູນ ແລະ ການສະໜັບສະໜຸນຂອງສຳນັກງານໃຫຍ່ຂອງບໍລິສັດຢູ່ເມືອງບຣິສເບີນ); ຄ່າພາສີສຳປະທານ;ຕົ້ນທຶນລວມ; ຄ່າເຊົ່າສຳປະທານ ແລະ ຄ່າທຳນຽມດອກເບ້ຍ; ແລະ ທຶນດ້ານການດັດປັບສິນຄ້າຄົງເຫຼືອ ແລະ ການຂຸດຄົ້ນທີ່ເລື່ອນອອກໄປ.

ກໍລະນີສຶກສາ

ການຈັດຕັ້ງປະຕິບັດໂຄງການປັບປຸງໂຄງສ້າງຄ່າໃຊ້ຈ່າຍ

ບໍລິສັດ ພູເບ້ຍ ມາຍນິງ ຊອກຄົ້ນໂອກາດເພື່ອເພີ່ມທະວີປະສິດທິຜົນ, ຫຼຸດຕົ້ນທຶນຕ່ຳລົງ ແລະ ຫຼຸດຄ່າໃຊ້ຈ່າຍເພີ່ມເຕີມ.

ການດຳເນີນຂອງ ບໍລິສັດ ພູເບ້ຍ ມາຍນິງຂຸດຄົ້ນ ແລະ ປຸງແຕ່ງແຮ່ຈາກແຫຼ່ງແຮ່ສະສົມທີ່ມີຄຸນນະພາບຕ່ຳ. ບໍລິສັດ ພະຍາຍາມຊອກຫາໂອກາດເພື່ອເພີ່ມທະວີປະສິດທິຜົນ, ຫຼຸດຕົ້ນທຶນ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍໃນອຸປະກອນເພີ່ມເຕີມ. ທີມງານຈາກຫຼາຍພະແນກຢູ່ ໂຮງງານຂອງບໍລິສັດ ພູເບ້ຍ ມາຍນິງ ໄດ້ປະຕິບັດຫຼັກການປັບປຸງໂຄງສ້າງຕົ້ນທຶນເພື່ອຮອງຮັບສິ່ງທ້າທາຍນີ້.

ທີມງານດຳເນີນການເພື່ອໂຄງການໃຊ້ຊັບພະຍາກອນໃຫ້ເກີດປະໂຫຍດສູງສຸດຈາກພະແນກປະຕິບັດງານຂ້າມສາຍງານຢູ່ໂຮງງານ ພູຄຳ ແລະ ໂຮງງານ ບ້ານຫ້ວຍຊາຍ

ໃນປີ 2017, ຍຸດທະສາດອີງຕາມຫຼັກການປັບປຸງໂຄງສ້າງຕົ້ນທຶນ ແມ່ນໄດ້ຈັດຕັ້ງປະຕິບັດເພື່ອເສີມຂະຫຍາຍຄຸນນະພາບໂດຍຜ່ານການລະບຸ ແລະ ການກຳຈັດສິ່ງເສດເຫຼືອ. ຍຸດທະສາດນີ້ສອດຄ່ອງກັບລະບົບຄຸ້ມຄອງການຜະລິດຂອງບໍລິສັດ ແພນອອສ, ບໍລິສັດແມ່ຂອງບໍລິສັດ ພູເບ້ຍ ມາຍນິງ, (ຈັດຕັ້ງປະຕິບັດໃນປີ 2015) ເຊິ່ງເສີມຂະຫຍາຍຄຸນນະພາບໂດຍຜ່ານຂະບວນການປັບປຸງອັນຕໍ່ເນື່ອງຄື: ວາງແຜນ - ຈັດຕັ້ງປະຕິບັດ - ທົບທວນຄືນ - ປັບປຸງ. ໂຄງການກ່ຽວຂ້ອງທີ່ໄດ້ຈັດຕັ້ງປະຕິບັດຕະຫຼອດປີປະກອບດ້ວຍການເສີມຂະຫຍາຍຂະບວນການເຊື່ອມລຸກບານເຄື່ອງຂົບແຮ່, ແລະ ການປັບປຸງເຄື່ອງຈັກຊີເຈາະຮຸລະເບີດ ໂດຍຜ່ານຂະບວນການກວດກາເປັນປົກກະຕິ.

ການຈັດຕັ້ງປະຕິບັດຫຼັກການປັບປຸງໂຄງສ້າງຕົ້ນທຶນ ແລະ ໂຄງການກ່ຽວຂ້ອງທີ່ປະສົບຜົນສຳເລັດດັ່ງກ່າວຈະສ້າງໃຫ້ມີການປະຢັດຕົ້ນທຶນ ແລະ ການປັບປຸງປະສິດທິຜົນອັນມະຫາສານ ເຊິ່ງເປັນປະໂຫຍດຕໍ່ທຸລະກິດ, ແລະ ຜົນຕອບແທນຕໍ່ລັດຖະບານລາວ ແລະ ຜູ້ຖືຮຸ້ນປີຕໍ່ປີຈົນເຖິງການປິດບໍ່.

ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເບິ່ງໜ້າທີ 26 ຂອງບົດທົບທວນການດຳເນີນທຸລະກິດ ແລະ ບົດລາຍງານການພັດທະນາແບບຍືນຍົງ ຂອງ ບໍລິສັດ ແພນອອສ 2017.

ການພັດທະນາຊຸມຊົນ ແລະ ສາຍພົວພັນກັບຊຸມຊົນ

ໃນປີ 2017, ໂຄງການພັດທະນາຊຸມຊົນ (CDF) ຂອງບໍລິສັດມີ 16 ໂຄງການພັດທະນາຊຸມຊົນຂະໜາດນ້ອຍ ເຊິ່ງຕິດພັນກັບໂຄງລ່າງພື້ນຖານ, ສາທາລະນະສຸກ, ການສຶກສາ, ການພັດທະນາດ້ານກະສິກຳ, ການພັດທະນາທຸລະກິດຂະໜາດນ້ອຍ ແລະ ການເງິນຈຸລະພາກ.

USD$175,102*	16	18
ໂດລາສະຫະລັດ ຄ່າໃຊ້ຈ່າຍໃນ ໂຄງການ CDF ໃໝ່	ໂຄງການ CDF ຂະໜາດນ້ອຍ ໄດ້ຮັບການຈັດຕັ້ງປະຕິບັດ	ຊຸມຊົນໄດ້ຮັບປະ�โยດຈາກ ໂຄງການ CDF

ທຶນພັດທະນາຊຸມຊົນ

ໂຄງການພັດທະນາຊຸມຊົນຂອງບໍລິສັດສະໜັບສະໜຸນບ້ານທີ່ເປັນເຈົ້າພາບ ຂອງການຂຸດຄົ້ນ, ວຽກງານສຳຫຼວດ, ແລະ ຕາມເສັ້ນທາງຂົນສົ່ງແຂ່ໃນການບັນ ລຸເປົ້າໝາຍການພັດທະນາແບບຍືນຍົງຂອງອົງການສະຫະປະຊາຊາດ ໂດຍປະກອບ ສ່ວນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ ແລະ ຄວາມກ້າວໜ້າດ້ານເສດຖະກິດໃນ ຊຸມຊົນໆນະບົດ. ບຸລິມະສິດການພັດທະນາຊຸມຊົນ ແມ່ນສອດຄ່ອງກັບແຜນຍຸທະສາດ ແລະ ເປົ້າໝາຍການພັດທະນາຂອງລັດຖະບານ, ຮູ້ໄດ້ຈາກຂໍ້ມູນຈາກການສຳຫຼວດ ດ້ານເສດຖະກິດ-ສັງຄົມເປັນໄລຍະ, ແລະ ໄດ້ຮັບການພັດທະນາໂດຍຜ່ານການປຶກ ສາຫາລືກັບຊາວບ້ານທ້ອງຖິ່ນ. ໃນປີ 2017, ໂຄງການ CDF ອີງໃສ່ທິດທາງອີກຫ້າປີ (2018-2022) ໄດ້ຕົກລົງເຫັນດີຕາມບົດບັນທຶກຄວາມເຂົ້າໃຈ ລະຫວ່າງບໍລິສັດ ພູເບ້ຍ ມາຍນິງ ແລະ ລັດຖະບານລາວ ເຊິ່ງກຳນົດການປະສານງານ ແລະ ການຄຸ້ມຄອງໂຄງການ. ເນື່ອງຈາກການດຳເນີນງານຂອງບໍລິສັດ ພູເບ້ຍ ມາຍນິງ ຢູ່ໂຮງງານ ພູຄຳ ແລະ ບ້ານ ຫ້ວຍຊາຍໃກ້ຈະສິ້ນສຸດໂດຍມີແຜນປິດບໍ່ໃນອີກຫ້າປີ ຂ້າງໜ້າ, ໂຄງການ CDF ແມ່ນໄດ້ເລີ່ມສຸມໃສ່ເພື່ອຮັບປະກັນໃຫ້ຜົນປະ�โยດສືບຕໍ່ ສະໜັບສະໜຸນຊຸມຊົນພາຍຫຼັງປິດບໍ່. ໂຄງການທີ່ໄດ້ສຳເລັດໃນປີ 2017 ມີຄື:

- ການຍົກລະດັບອາຄານໂຮງຮຽນປະຖົມ ນາໄຊສະຫວ່າງ
- ການກໍ່ສ້າງໂຮງຮຽນມັດທະຍົມສົມບຸນ ແລະ ຫໍພັກຄູອານຢູ່ບ້ານ ນ້ຳໂມ້
- ການສ້າງລະບົບນ້ຳລິນໃໝ່ຢູ່ບ້ານ ນ້ຳຍອນ ແລະ ບ້ານ ນ້ຳໂມ້
- ການກໍ່ສ້າງໝ່ວຍຄຸ້ມຄອງການເງິນຈຸລະພາກຢູ່ບ້ານ ນ້ຳໂມການກໍ່ສ້າງຝາຍນ້ຳ ລົ້ນຢູ່ບ້ານ ນາໄຊສະຫວ່າງ
- ການກໍ່ສ້າງຕະຫຼາດຢູ່ບ້ານ ນ້ຳໂມ້

ແຜນລິເລີ່ມທຸລະກິດຊຸມຊົນ

ໃນປີ 2017, ບໍລິສັດ ພູເບ້ຍ ມາຍນິງ ໄດ້ຊື້ສິນຄ້າບໍລິໂພກຈຳນວນ $1,041,799 ຈາກທຸລະກິດຊຸມຊົນຂະໜາດນ້ອຍຜະລິດສິນຄ້າບໍລິໂພກເຊັ່ນ: ຜັກ, ນ້ຳດື່ມ, ໄຂ່, ຖົ່ງຜ້າ, ໝາກໄມ້ ແລະ ປາ. ການຝຶກອົບຮົມດ້ານກະສິກຳ ໄດ້ຈັດໃຫ້ປະຊາ ຊົນທ້ອງຖິ່ນເພື່ອປັບປຸງຄຸນນະພາບ ແລະ ຄວາມຫຼາກຫຼາຍຂອງຜົນຜະລິດ, ແລະ ການສ້າງຄວາມສາມາດໃນການລ້ຽງສັດ.

ການເຂົ້າເຖິງການບໍລິການດ້ານການເງິນ

ນັບແຕ່ປີ 2010 ເປັນຕົ້ນມາ, ບໍລິສັດໄດ້ຊ່ວຍເຫຼືອ 12 ຊຸມຊົນທ້ອງຖິ່ນເພື່ອຈັດຕັ້ງ ແຜນການເງິນຈຸລະພາກໂດຍຜ່ານກອງທຶນການອອມ ແລະ ສິນເຊື່ອ. ກອງທຶນດັ່ງກ່າວ ເຮັດໃຫ້ປະຊາຊົນເຂົ້າເຖິງການອຳນວຍຄວາມສະດວກດ້ານການອອມ ແລະ ກູ້ຢືມ ເງິນເຊິ່ງບໍ່ຄ່ອຍມີຢູ່ໃນເຂດຊົນນະບົດ. ສະມາຊິກສາມາດກູ້ຢືມເງິນເພື່ອສະໜັບສະ ໜຸນເຂົ້າໃນກິດຈະການສ້າງລາຍຮັບຂະໜາດນ້ອຍທີ່ຫຼາກຫຼາຍ ລວມທັງ ຄ່າໃຊ້ຈ່າຍ ໃນຄົວເຮືອນເຊັ່ນ: ການສຶກສາ ແລະ ການເບິ່ງແຍງສຸຂະພາບ. ໃນປີ 2017, ບໍລິສັດ ພູເບ້ຍ ມາຍນິງໄດ້ມອບ-ຮັບຄວາມຮັບຜິດຊອບໃນການຄຸ້ມຄອງກອງທຶນດັ່ງກ່າວ ຢູ່ບ້ານ ໂພນເລົ່າ, ວັງຫຼວງ, ນ້ຳ ໂຂ້ຍ, ບ້ານ ເມືອງຫຼວງ, ຊຽງມີ ແລະ ນາໂພ ໃຫ້ແຕ່ລະ ບ້ານ ແລະ ເມືອງ ລ້ອງຊານຢ່າງເປັນທາງການ. ກອງທຶນທີ່ຍັງເຫຼືອໃນບ້ານ ນ້ຳຍອນ ແລະ ນ້ຳໂມ້ແມ່ນສືບຕໍ່ຄຸ້ມຄອງໂດຍຄະນະກຳມະການຊີ້ນຳເມືອງ ອານຸວົງປະຈຳເດືອນ ແລະ ມີການກວດສອບປະຈຳປີ. ເພື່ອສະໜັບສະໜຸນຈຸດປະສົງຂອງການປິດບໍ່, ກອງທຶນເຫຼົ່ານີ້ຈະພັດທະນາໃຫ້ກາຍເປັນສະຫະກອນການອອມ ແລະ ສິນເຊື່ອ ທີ່ໄດ້ຈົດທະບຽນນຳທະນາຄານແຫ່ງ ສປປ ລາວ ແລະ ໄດ້ລວມເຂົ້າໃນໂຄງການ CDF ໃນຕໍ່ໜ້າ.

ການແກ້ໄຂຊີວິດການເປັນຢູ່

ເນື່ອງຈາກການດຳເນີນງານຂອງບໍລິສັດ ພູເບ້ຍ ມາຍນິງ ແມ່ນເຕີບໂຕເຕັມສ່ວນ, ເຊິ່ງ ລວມເຖິງຄວາມຈຳເປັນຕ່ຳລົງໃນການບຸກເບີກເນື້ອທີ່ດິນໃໝ່ສຳລັບການຂຸດຄົ້ນ. ໃນປີ 2017 ບໍລິສັດໄດ້ຈ່າຍຄ່າຊົດເຊີຍ ແລະ ແກ້ໄຂບັນເທົາທຸກຈຳນວນທັງໝົດ $3,113 ໂດລາສະຫະລັດສຳລັບຜົນກະທົບໃນຊີວິດເປັນຢູ່ຈາກການສ້າງເສດຖະກິດທີ່ຕິດພັນ ກັບທີ່ດິນ.

ການສະໜັບສະໜຸນ ແລະ ການບໍລິຈາກ

ບໍລິສັດ ພູເບ້ຍ ມາຍນິງໄດ້ໃຫ້ການສະໜັບສະໜຸນ ແລະ ບໍລິຈາກໃຫ້ໂຄງການ, ອົງການຈັດຕັ້ງ ແລະ ກິດຈະກຳ ເຊິ່ງສ້າງຄວາມມີນ້ຳໃຈຢູ່ເຂດດຳເນີນງານ ແລະ ສອດຄ່ອງກັບຄຸນນະທຳຂອງບໍລິສັດ. ໃນປີ 2017, ບໍລິສັດ ພູເບ້ຍ ມາຍນິງໄດ້ບໍລິ ຈາກເງິນສົດ ແລະ ວັດຖຸປັດໃຈໃຫ້ຜູ້ຮັບຈາກຫຼາຍຂົງເຂດຈຳນວນ $118,000 ໂດລາສະຫະລັດ.

ການກະກຽມການປິດບໍ່

ເຖິງແມ່ນການປິດບໍ່ ສຳລັບໂຮງງານຂອງບໍລິສັດ ພູເບ້ຍ ມາຍນິງແມ່ນຍັງມີໄລຍະຫ້າປີ, ບໍລິສັດ ພູເບ້ຍ ມາຍນິງໄດ້ປຶກສາຫາລືກ່ຽວກັບຜົນກະທົບຂອງການປິດບໍ່, ການນຳໃຊ້ ດິນພາຍຫຼັງປິດບໍ່, ແລະ ບັນຫາອື່ນໆທີ່ກ່ຽວຂ້ອງກັບການປິດບໍ່ ນຳລັດຖະບານລາວ ແລະ ຊຸມຊົນເຈົ້າພາບ.

ໃນປີ 2017, ບົດທົບທວນການປະເມີນເສດຖະກິດ ແລະ ສັງຄົມເບື້ອງຕົ້ນ ເຊິ່ງກຳນົດ ການປິດບໍ່ຢູ່ໂຮງງານ ພູຄຳ ແລະ ບ້ານ ຫ້ວຍຊາຍໄດ້ສຳເລັດ, ລວມທັງບົດທົບທວນເອ ກະລາດຂອງໂຄງການກະສິກຳ ແລະ ທາງເລືອກສຳລັບໂຄງການ CDF. ຍຸດທະສາດ ການດຳເນີນການປິດບໍ່ທາງສັງຄົມແມ່ນໄດ້ຮ່າງ ເຊິ່ງລວມມີເງື່ອນໄຂທາງສັງຄົມໃນການ ປິດບໍ່.

ຄວາມກັງວົນຂອງຊຸມຊົນ

ບໍລິສັດ ພູເບ້ຍ ມາຍນິງ ຈຳກັດ ໄດ້ວາງກົນໄກອອກເພື່ອຮັບ ແລະ ຕອບການຮ້ອງທຸກ ແລະ ຄວາມກັງວົນຂອງຄູ່ຮ່ວມງານ. ໃນລະຫວ່າງປີ 2017, ໜັງສືຄຳຮ້ອງ 2 ສະບັບ ໄດ້ດຳເນີນການ ແລະ ແກ້ໄຂ ທີ່ກ່ຽວຂ້ອງກັບຜົນກະທົບຕໍ່ທີ່ດິນກະສິກຳ.

ການຍົກຍ້າຍຈັດສັນທາງກາຍະພາບ

ໃນປີ 2017, ບໍລິສັດ ພູເບ້ຍ ມາຍນິງ ຈຳກັດ ບໍ່ຈຳເປັນມີການຍົກຍ້າຍຖິ່ນຖານໂດຍບໍ່ ສະໝັກໃຈ ທີ່ຈຳເປັນຕ້ອງການຍົກຍ້າຍຈັດສັນທາງກາຍະພາບ (ຫຼືເອີ້ນວ່າ ການຍ້າຍ ຫຼື ການສູນເສຍທີ່ຢູ່ອາໃສ), ເພື່ອພັດທະນາໂຄງການ ຫຼື ດຳເນີນງານຕ່າງໆຂອງ ບໍລິສັດ.

* ເນື່ອງຈາກມີການປ່ຽນແປງໂຄງຮ່າງການຈັດຕັ້ງຂອງກົມຕ່າງໆຂອງລັດຖະບານທີ່ຄຸ້ມຄອງແຜນງານ ແລະ ຄວາມຄາດຫວັງທີ່ແຕກຕ່າງກັນຂອງກົມດັ່ງກ່າວກ່ຽວກັບການກວດສອບ, ການເຊັນອະນຸມັດຍັງລ້າຊ້າຈົນມາ ຮອດເດືອນກັນຍາ 2017. ງົບປະມານຂອງ ໃນປີ 2017 ໄດ້ຈັດຕັ້ງປະຕິບັດໄປຈົນເຖິງປີ 2018.

ກໍລະນີສຶກສາ

ວິວັດທະນາການຂອງທຶນພັດທະນາຊຸມຊົນ

ການສົ່ງເສີມການພັດທະນາ
ທີ່ນຳພາໂດຍຊຸມຊົນ
ສ້າງໃຫ້**ຊຸມຊົນ**ມີຄວາມ
ວັດທະນະຖາວອນ.

ນັບແຕ່ແຜນງານການພັດທະນາຊຸມຊົນຄັ້ງທຳອິດໄດ້ຈັດຕັ້ງປະຕິບັດໃນປີ 2006, ວິທີການຂອງບໍລິສັດ ພູເບັຍ ມາຍນິງໃນການພັດທະນາຊຸມຊົນສຳລັບຊຸມຊົນທີ່ຢູ່ໃກ້ເຂດດຳເນີນງານ ແລະ ຕາມເສັ້ນທາງຂົນສົ່ງແຮ່ ໄດ້ປ່ຽນຈາກການດຳເນີນໂຄງການທີ່ນຳພາໂດຍບໍລິສັດປະຈຳປີ ກາຍເປັນໂຄງການທີ່ນຳພາໂດຍຊຸມຊົນ.

ແຜນງານພັດທະນາຊຸມຊົນໄດ້ຈັດຕັ້ງປະຕິບັດໃນໄລຍະການດຳເນີນໂຮງງານຜະລິດຄຳ ແບບກອງແຮ່ (GMO) ເຕັມປີທຳອິດໃນປີ 2006. ໃນປີ 2007 ແຜນງານໄດ້ຈັດຕັ້ງ ໃຫ້ເປັນກອງທຶນພັດທະນາຊຸມຊົນ (CDF) ຢ່າງເປັນທາງການ ພາຍໃຕ້ບົດບັນທຶກ ຄວາມເຂົ້າໃຈລະຫວ່າງບໍລິສັດ ແລະ ລັດຖະບານລາວ (MoA) ເພື່ອສະໜັບສະໜູນ ບ້ານ ນ້ຳຍອນ ແລະ ນ້ຳໂມ້.

ເປົ້າໝາຍຂອງໂຄງການ CDF ແມ່ນເພື່ອສ້າງໃຫ້ປະຊາຊົນທີ່ຢູ່ໃກ້ເຂດດຳເນີນງານຂອງ ບໍລິສັດ, ໃກ້ເຂດສຳຫຼວດຂຸດຄົ້ນ, ຕາມເສັ້ນທາງຂົນສົ່ງແຮ່ເພື່ອເປັນເຈົ້າການກຳນົດບຸລິ ມະສິດການພັດທະນາຂອງພວກເຂົາເອງ, ທີ່ອຳນວຍຄວາມສະດວກການດຳເນີນຊີວິດ ເປັນຢູ່ທາງເສດຖະກິດ ແລະ ສັງຄົມແບບຍືນຍົງ ເຊິ່ງອາດສືບຕໍ່ການອາຍຸຂອງບໍ່ຂຸດຄົ້ນ.

ເພື່ອໃຫ້ສອດຄ່ອງກັບບຸລິມະສິດການພັດທະນາຊຸມຊົນ ແລະ ຍຸດທະສາດ ແລະ ເປົ້າໝາຍການພັດທະນາແຫ່ງຊາດ, ໂຄງການ CDF ໄດ້ຜ່ານການທົບທວນ ແລະ ປ່ຽນແປງຫຼາຍຄັ້ງ. ໃນປີ 2017, ແຜນ CDF ໄດ້ທົບທວນຄືນ ແລະ ພັດທະນາຕາມແຜນການຫ້າປີ ເຊິ່ງຈະສຸມໃສ່ການສ້າງຜົນໄດ້ຮັບພາຍຫຼັງປິດບໍ່. ແຜນ ດັ່ງກ່າວແມ່ນໃສ່ເພື່ອຮັບປະກັນว่าເມື່ອຮອດຄາມປິດບໍ່, ທັງສາມບ້ານທີ່ຢູ່ໃກ້ເຂດການ ດຳເນີນງານຂອງບໍລິສັດຈະບັນລຸເປົ້າໝາຍການພັດທະນາຕົ້ນຕໍສຳລັບການສຶກສາ, ສາທາລະນະສຸກ, ນ້ຳສະອາດ ແລະ ສຸຂາພິບານ, ຊີວິດເປັນຢູ່ ແລະ ການບໍລິຫານລັດ.

ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເບິ່ງໜ້າທີ 61 ຂອງບົດທົບທວນການດຳເນີນທຸລະກິດ ແລະ ບົດລາຍງານການພັດທະນາແບບຍືນຍົງ ຂອງ ບໍລິສັດ ແພນອອສ 2017.

ການປະຕິບັດວຽກງານດ້ານສິ່ງແວດລ້ອມ

ບໍລິສັດ ພູເບັຍ ມາຍນິງ ສືບຕໍ່ປະຕິບັດໄດ້ຕາມມາດຕະຖານດ້ານສິ່ງແວດລ້ອມທີ່ກ່ຽວຂ້ອງ ແລະ ດຳເນີນງານສອດຄ່ອງກັບການປະຕິບັດທີ່ດີເລີດຂອງໂລກ, ເຊິ່ງຢັ້ງຢືນໂດຍການກວດສອບ ແລະ ການທົບທວນຈາກພາຍນອກທີ່ໄດ້ປະຕິບັດໃນລະຫວ່າງປີດັ່ງກ່າວ.

0 ອຸປະຕິເຫດດ້ານສິ່ງແວດລ້ອມທີ່ຮ້າຍແຮງ	**25** ເຮັກຕາ ຂອງເນື້ອທີ່ດິນທີ່ໄດ້ຮັບການຟື້ນຟູ	**95 ສ່ວນຮ້ອຍ** ຂອງນ້ຳທີ່ນຳກັບມາໃຊ້ຄືນໃໝ່ຢູ່ໂຮງງານ ພູຄຳ

ອຸປະຕິເຫດດ້ານສິ່ງແວດລ້ອມ

ໃນປີ 2017, ບໍລິສັດ ພູເບັຍ ມາຍນິງ ຈຳກັດ ບໍ່ມີອຸປະຕິເຫດດ້ານສິ່ງແວດລ້ອມທີ່ຮ້າຍແຮງແຕ່ຢ່າງໃດ (ລະບຸໄວ້ໃນອຸປະຕິເຫດລະດັບ 3 ຫຼື ສູງກວ່າ*), ການຮ້ອງທຸກ, ການຮົ່ວໄຫຼ, ການລົງໂທດ, ການປັບໄໝ ຫຼື ບົດລົງ�โทດສຳລັບການບໍ່ປະຕິບັດຕາມກົດໝາຍ.

ອ່າງເກັບຫາງແຮ່ (TSF)

ໃນປີດັ່ງກ່າວ, ການທົບທວນຕາມແຜນຂອງອ່າງເກັບຫາງແຮ່ (TSF) ໂຮງງານ ພູຄຳ ແລະ ບ້ານ ຫ້ວຍຊາຍລວມມີການຕິດຕາມກວດກາພາກສະໜາມໄດ້ເຮັດສຳເລັດ. ໂດຍລວມ, ຂໍ້ມູນທີ່ໄດ້ຈາກການທົບທວນ ແມ່ນມີຜົນທາງບວກ ໂດຍບໍ່ມີຂໍ້ບົກຜ່ອງທີ່ລະບຸໄດ້ແຕ່ຢ່າງໃດ. ທັງສອງໂຮງງານປ່ອຍນ້ຳທີ່ມີປະລິມານເກີນອອກຈາກ TSF ບົນພື້ນຖານການຄວບຄຸມ ແລະ ຕໍ່ເນື່ອງ. ຄວາມເປັນໄປໄດ້ຂອງທາດແຂວງທັງໝົດທີ່ບໍ່ລະລາຍໃນນ້ຳ (TSS) ທີ່ເກີນລະດັບໃນບາງໄລຍະຂອງປີ 2017 ອາດເກີດຂຶ້ນໄດ້ພາຍຫຼັງມີພາຍຸແຮງທີ່ສຸດໃນໄລຍະລະດູຝົນ. ຢູ່ໂຮງງານ ບ້ານ ຫ້ວຍຊາຍ, ມີຄວາມເປັນໄປໄດ້ທີ່ TSS ອາດເກີນລະດັບ ເຊິ່ງຈະໄດ້ສືບຕໍ່ກວດກາໂດຍມີການປະສານສົມທົບກັບພະນັກງານລັດຖະບານລາວ.

ບົດກ່ອນບົດວິພາກເສດຖະກິດ-ເຕັກນິກສຳລັບການປິດບໍ່ຂຸດຄົ້ນຂອງບໍລິສັດໄດ້ສຳເລັດໃນປີ 2017 ເພື່ອແຈ້ງໃຫ້ຊາບກ່ຽວກັບການອອກແບບຂັ້ນສຸດທ້າຍຂອງອ່າງເກັບຫາງແຮ່, ແລະ ຈະເລີ່ມສ້າງເປັນບົດວິພາກເສດຖະກິດ-ເຕັກນິກໃນປີ 2018 ເຊິ່ງເປັນພາກສ່ວນໜຶ່ງຂອງແຜນການປິດບໍ່.

ຫີນທີ່ເປັນກົດ (ARD)

ແຜນການຄຸ້ມຄອງຫີນທີ່ເປັນກົດມີໄວ້ຢູ່ ໂຮງງານ ພູຄຳ ແລະ ໂຮງງານ ບ້ານຫ້ວຍຊາຍ ກ່ອນທັງການດຳເນີນການຂຸດຄົ້ນແຮ່ເລີ່ມຈັດຕັ້ງປະຕິບັດ. ແຜນດັ່ງກ່າວມີຍຸດທະສາດສຳລັບການກຳນົດ, ຄວບຄຸມ ແລະ ກວດກາເສດຫີນ. ການທົບທວນຂອງທີ່ປຶກສາຢັ້ງຢືນວ່າແຜນງານສຳລັບການຄຸ້ມຄອງຄວາມສ່ຽງຂອງ ARD ຢູ່ທັງສອງໂຮງງານ ແມ່ນໄດ້ຮັບການພັດທະນາຢ່າງຫຼວງຫຼາຍ ແລະ ສອດຄ່ອງກັບວິທີການທີ່ລະບຸໄວ້ໃນຄູ່ມືແນະນຳກ່ຽວກັບຫີນທີ່ເປັນກົດຂອງໂລກ.

ການນຳໃຊ້ນ້ຳ

ເນື່ອງຈາກການນຳໃຊ້ນ້ຳຂອງບໍລິສັດ ພູເບັຍ ມາຍນິງ ຈຳກັດ ແມ່ນມີຄວາມສຳຄັນຫຼາຍ, ເຊິ່ງປະລິມານສ່ວນຫຼາຍ ໄດ້ຖືກນຳກັບມາໃຊ້ຄືນໃໝ່. ປະມານ 95 ສ່ວນຮ້ອຍຂອງນ້ຳທີ່ນຳໃຊ້ຢູ່ໂຮງງານ ພູຄຳ ແມ່ນຖືກນຳກັບມາໃຊ້ຄືນໃໝ່, ໂດຍມີຄວາມຜິດດ່ຽງທີ່ໄດ້ມາຈາກນ້ຳຢູ່ນ້ຳໂມ້. ການກັບມາໃຊ້ນ້ຳຄືນໃໝ່ ແມ່ນມີຂີດຈຳກັດຢູ່ໂຮງງານ ບ້ານຫ້ວຍຊາຍ ເນື່ອງຈາກຂໍ້ຈຳກັດທາງດ້ານພູມີປະເທດ. ອັດຕາການໝຸນນ້ຳມາໃຊ້ຄືນໃໝ່ໂດຍລວມໃນໂຮງງານ ພູຄຳ ແລະ ບ້ານ ຫ້ວຍຊາຍໃນປີ 2017 ແມ່ນ 85 ສ່ວນຮ້ອຍ.

ການປ່ອຍນ້ຳ (ໂຮງງານຜະລິດຄຳແບບກອງແຮ່)

ໃນປີ 2017, ແຜນການປິດບໍ່ສຳລັບໂຮງງານຜະລິດຄຳແບບກອງແຮ່ (GMO) ໄດ້ທົບທວນຄືນໂດຍມີຍຸດທະສາດທີ່ໄດ້ປັບປຸງ ສຳລັບການຄຸ້ມຄອງເຂດກອງແຮ່ເກົ່າ ແລະ ມີແຜ່ນຢາງປົກຫຸ້ມໝວງນ້ຳ ເພື່ອຫຼຸດຜ່ອນຄວາມສ່ຽງດ້ານສິ່ງແວດລ້ອມໃນໄລຍະຍາວ. ການກໍ່ສ້າງລະບົບດິນທາມເພື່ອກັ້ນກອງ ແລະ ບຳບັດນ້ຳຈາກພາຍຸຝົນແບບທຳມະຊາດທີ່ປ່ອຍອອກຈາກໂຮງງານໄດ້ດຳເນີນດ້ວຍຄວາມສຳເລັດໃນການບຳບັດນ້ຳຈາກໂຮງງານ. ການຕິດຕາມລະບົບຂອງສາຍນ້ຳຕອນລຸ່ມທີ່ຕໍ່ເນື່ອງ ໄດ້ຢັ້ງຢືນວ່າປະລິມານນ້ຳສ່ວນເກີນທີ່ປ່ອຍອອກແມ່ນຢູ່ໃນຂີດກຳນົດຂອງນ້ຳທຳມະຊາດຕະຫຼອດປີ.

ຫຼັກການຄຸ້ມຄອງສານໄຊຍະນາຍສາກົນ (ICMC)

ໂຮງງານ ບ້ານຫ້ວຍຊາຍ ນຳໃຊ້ສານໄຊຍະນາຍເຂົ້າໃນການປຸງແຕ່ງທີ່ໃຊ້ວິງຈອນໄຟຟ້າສຳລັບການຜະລິດໂລຫະທາດ; ບໍ່ມີການນຳໃຊ້ສານໄຊຍະນາຍຢູ່ໂຮງງານ ພູຄຳ. ໂຮງງານ ບ້ານຫ້ວຍຊາຍ ສຳເລັດການຢັ້ງຢືນດ້ານການດຳເນີນງານຕໍ່ຫຼັກການຄຸ້ມຄອງສານໄຊຍະນາຍສາກົນ ໃນເດືອນມີນາ 2013. ໃນປີ 2017 ການວິເຄາະວຽກງານພາຍໃນໄດ້ດຳເນີນການ ແລະ ພົບວ່າລະດັບໂຮງງານໄດ້ມີການປະຕິບັດຕາມຫຼັກການດັ່ງກ່າວຢ່າງເຕັມສ່ວນ. ການກວດສອບການຢັ້ງຢືນຄັ້ງທີສາມ ແມ່ນຈະດຳເນີນໃນປີ 2019.

ການຟື້ນຟູ ແລະ ແຜນການປິດບໍ່

ທັງໂຮງງານ ພູຄຳ ແລະ ໂຮງງານ ບ້ານຫ້ວຍຊາຍ ມີແຜນຟື້ນຟູປະຈຳ. ໃນປີ 2017, ທີ່ດິນ 68 ເຮັກຕາ ໄດ້ຖືກລົບກວນທົ່ວທັງສອງໂຮງງານ ແລະ 24 ເຮັກຕາໄດ້ຮັບການຟື້ນຟູ. ທີ່ດິນຊຶ່ງຖືກລົບກວນທີ່ຍັງເຫຼືອທັງໝົດຢູ່ທັງສອງພາກສະໜາມແມ່ນ 1,457 ເຮັກຕາ. ທັງສອງໂຮງງານ ແມ່ນມີສວນເບັຍໄມ້ເພື່ອແຜ່ພັນເບັຍໄມ້ພື້ນບ້ານສຳລັບນຳໃຊ້ເຂົ້າໃນການຟື້ນຟູ. ໃນປີ 2017, ແຜນການປິດບໍ່ໂຮງງານ ພູຄຳ ແລະ ບ້ານ ຫ້ວຍຊາຍ ໄດ້ທົບທວນຄືນໃນລະດັບການສ້າງບົດກ່ອນບົດວິພາກເສດຖະກິດ-ເຕັກນິກ. ໃນເດືອນ ສິງຫາ, ພາຍຫຼັງການປັບປຸງຄະນະກຳມະການປິດບໍ່ຂອງລັດຖະບານລາວ ພາຍໃຕ້ບົດບັນທຶກຄວາມເຂົ້າໃຈສະບັບໃໝ່, ບໍລິສັດ ພູເບັຍ ມາຍນິງ ແລະ ຄະນະກຳມະການໄດ້ຈັດຕັ້ງກອງປະຊຸມຄະນະກຳມະການຄືນ ເພື່ອຮັບປະກັນວ່າກິດຈະກຳການປິດບໍ່ຂອງບໍລິສັດ ພູເບັຍ ມາຍນິງແມ່ນສອດຄ່ອງກັບຄວາມຄາດຫວັງຂອງຜູ້ມີສ່ວນກ່ຽວຂ້ອງ. ການປ່ຽນແປງເພີ່ມເຕີມໃນສະມາຊິກຄະນະກຳມະການດັ່ງກ່າວແມ່ນກຳລັງທົບທວນໃນປະຈຸບັນ ແລະ ຄາດວ່າຈະມີຕາງໜ້າຈາກຫຼາຍພາກສ່ວນຂອງລັດຖະບານສູນກາງໃນປີ 2018.

ການຄຸ້ມຄອງພະລັງງານ ແລະ ສານກາກບອນ

ການດຳເນີນງານຂອງບໍລິສັດນຳໃຊ້ແຫຼ່ງພະລັງງານແບບປະສົມປະສານທາງກົງ ແລະ ທາງອ້ອມເປັນສ່ວນໃຫຍ່ (ນ້ຳມັນເຊື້ອໄຟ ແລະ ພະລັງງານໄຟຟ້າ), ເພື່ອຈັດຕັ້ງປະຕິບັດກິດຈະກຳຂອງຕົນ. ແຕ່ລະປີ, ທີມງານທົ່ວຂະແໜງທຸລະກິດຂອງບໍລິສັດຈະກຳນົດ ແລະ ຈັດຕັ້ງປະຕິບັດໂຄງການ ເຊິ່ງຈະຫຼຸດຜ່ອນການຊົມໃຊ້ພະລັງງານ ແລະ/ຫຼື ອຸປະກອນສິ້ນເປືອງ. ໂຄງການທີ່ໄດ້ຈັດຕັ້ງປະຕິບັດສຳເລັດໃນປີ 2017 ມີຄື:

- ການຈັດຕັ້ງປະຕິບັດການຂົນສົ່ງນ້ຳມັນກະຊວນ ຫຼັງລົດຂົນສົ່ງແຮ່ຕິລົດເປົ່າຂາກັບ
- ແຜນງານອື່ນໆທີ່ມີໃນທີມງານບຳລຸງສ້ອມແປງແມ່ນຍົກລະດັບດອກໄຟທັງໝົດຢູ່ໂຮງງານ, ປ່ຽນນ້ຳມັນເຄື່ອງລົດຊະນິດປະສົມແຮ່ ມາເປັນນ້ຳມັນເຄື່ອງປະສົມສິນເທຄິກ ເພື່ອຫຼຸດຜ່ອນການສຽດສີໃນກະປຸກເກຍ ແລະ ຫຼຸດຜ່ອນການຊົມໃຊ້ພະລັງງານ, ປ່ຽນຕູ້ເກັບພະລັງງານໄຟຟ້າແຮງສູງເພື່ອປັບປຸງການແຈກໄຟຟ້າໃນໂຮງງານ (ເຮັດໃຫ້ໂຮງງານສາມາດນຳໃຊ້ໄຟຟ້າຕົວຈິງໄດ້ຢ່າງມີປະສິດທິພາບ).

ການຄວບຄຸມຕະກອນ ແລະ ການເຊາະເຈື່ອນ

ໄລຍະປີ 2017, ໄດ້ສືບຕໍ່ວຽກງານການວາງແຜນ ແລະ ຈັດຕັ້ງປະຕິບັດການປັບປຸງການຄວບຄຸມຕະກອນ ແລະ ການເຊາະເຈື່ອນ ຢູ່ ລາວ. ວຽກຈຸດສຸມຫຼັກແມ່ນການປ້ອງກັນການເຊາະເຈື່ອນໂດຍມີການປັບລະດັບໜ້າດິນ ແລະ ການປູກຕົ້ນໄມ້ຄືນໃໝ່.

* ແຕ່ລະກໍລະນີແມ່ນຈັດຕາມລະດັບຄວາມສຳຄັນຕໍ່ຄູ່ຮ່ວມງານພາຍນອກ ແລະ ບໍລິສັດ ແພນອອສ. ເກນມາດຕະຖານການຈັດລະດັບ ສ່ວນໃຫຍ່ແມ່ນອີງຕາມບໍລິສັດ ແພນອອສ່ວ່າຈະລະບຸຄວາມຮ້າຍແຮງຂອງກໍລະນີຕ່າງໆແນວໃດ (ລະບຸເປັນອຸປະຕິເຫດລະດັບ 4 ແລະ 5/ອຸປະຕິເຫດທີ່ອາດເກີດຂຶ້ນໄດ້ສູງ ໂດຍນຳໃຊ້ 'ຕາຕະລາງກ່ຽວກັບຜົນຂອງອຸປະຕິເຫດ' ຂອງບໍລິສັດ) ແລະ ເຮັດໃຫ້ວຽກງານຕ່າງໆມີມາດຕະຖານ. ຕາຕະລາງຜົນຂອງອຸປະຕິເຫດດັ່ງກ່າວ ແມ່ນມີຢູ່ໃນເວັບໄຊຂອງແພນອອສ, www.panaust.com.au/corporate-governance.

ກໍລະນີສຶກສາ
ການຂົນສົ່ງນ້ຳມັນກະຊວນ

ວິທີການສ້າງ**ຄວາມສຳເລັດ**ໃນການດຳເນີນທຸລະກິດ**ແບບຮອບດ້ານ.**

ແຜນງານຂົນສົ່ງນ້ຳມັນກະຊວນເທິງລົດຂົນແຮ່ທີ່ເປົ່າຂາກັບ, ທີ່ສ້າງຕາມແນວຄິດ ແລະ ຈັດຕັ້ງປະຕິບັດໂດຍທີມງານຂົນສົ່ງຂອງບໍລິສັດ, ໄດ້ຫຼຸດຄ່າໃຊ້ຈ່າຍ ແລະ ຜົນກະທົບທາງສິ່ງແວດລ້ອມ, ແລະ ປັບປຸງຄວາມປອດໄພ ແລະ ການມີສ່ວນຮ່ວມຂອງແຮງງານຍິງ.

ຕູ້ຄອນເທັນເນີເປົ່າຢອງຢູ່ເທິງຖັງທີ່ບັນຈຸນ້ຳມັນເຕັມ ກຳລັງຖືກຂົນສົ່ງໄປໂຮງງານ ພູຄຳ ເພື່ອຂົນເອົາແຮ່ເຂັ້ມຂຸ້ນ, ເດືອນພະຈິກປີ 2017

ການຂົນສົ່ງຖັງນ້ຳມັນກະຊວນເທິງລົດຂົນແຮ່ທີ່ເປົ່າຂາກັບ ໄດ້ເລີ່ມຈາກແນວຄິດໃນປີ 2015 ເພື່ອປັບປຸງການດຳເນີນການຂົນສົ່ງນ້ຳມັນເຊື້ອໄຟຂອງບໍລິສັດ. ຖັງນ້ຳມັນທີ່ມີຄວາມສູງຫຼຸດເຄິ່ງໜຶ່ງຂອງຖັງນ້ຳມັນທົ່ວໄປ ແລະ ອອກແບບສະເພາະແມ່ນໄດ້ວາງເທິງລົດແຮ່ທີ່ເປົ່າ ໂດຍມີຕູ້ແຮ່ເປົ່າວາງເທິງອີກຊັ້ນ ຈະອອກຈາກຈຸດຂົນສົ່ງບ້ານ ທວາຍ ຫາ ໂຮງງານ ພູຄຳ. ເມື່ອມາເຖິງໂຮງງານຖັງນ້ຳມັນເຊື້ອໄຟ ຈະໄປຖ່າຍນ້ຳລົງໃນຖັງນ້ຳມັນລວມຂອງໂຮງງານກ່ອນລົດຂົນແຮ່ຈະໄປເຂດປຸງແຕ່ງເພື່ອບັນຈຸແຮ່ໃສ່ຕູ້ຂົນແຮ່ໃຫ້ເຕັມ. ພາຍຫຼັງທີ່ຕູ້ຂົນແຮ່ບັນຈຸແຮ່ເຕັມແລ້ວ, ຖັງນ້ຳມັນກະຊວນເປົ່າຈະຖືກວາງເທິງຕູ້ແຮ່ທີ່ເຕັມເພື່ອກັບໄປບ້ານທວາຍໃນຖ້ຽວດຽວກັນ.

ການທົບທວນເອກະລາດຂອງຖັງນ້ຳມັນໃນໄລຍະທົດສອບການຂົນສົ່ງໃນປີ 2016 ພາຍຫຼັງການສຳເລັດອົງປະກອບສຳຄັນພາຍໃນທັງໝົດຂອງການອອກແບບຖັງທີ່ມີຄວາມສູງຫຼຸດເຄິ່ງໜຶ່ງຂອງຖັງນ້ຳມັນທົ່ວໄປ ຢັ້ງຢືນວ່າການຂົນສົ່ງແມ່ນຄົງທີ່ ແລະ ປອດໄພທັງຂາໄປທີ່ມີຕູ້ຂົນແຮ່ເຕັມ ຫຼື ການຂົນສົ່ງນ້ຳມັນຂາກັບທີ່ມີຕູ້ຂົນແຮ່ທີ່ເປົ່າ.

ການຂົນນ້ຳມັນກະຊວນເທິງຕູ້ຂົນແຮ່ທີ່ເປົ່າຂາກັບ ໄດ້ຫຼຸດຄວາມຈຳເປັນສຳລັບການຂົນສົ່ງນ້ຳມັນກະຊວນແຍກຕ່າງຫາກ ຫາເຂດດຳເນີນງານ, ຫຼຸດຈຳນວນການເຄື່ອນຍ້າຍລົດບັນທຸກປະຈຳວັນຈຳນວນເກົ້າຖ້ຽວ (ແລະ ການຊົມໃຊ້ນ້ຳມັນເຊື້ອໄຟ) ແລະ ຫຼຸດຈຳນວນການເຄື່ອນຍ້າຍລົດບັນທຸກປະຈຳປີຫຼາຍກວ່າ 3,200 ຖ້ຽວ. ແຜນງານດັ່ງກ່າວໄດ້ປະຢັດຕົ້ນທຶນຂົນສົ່ງຫຼາຍກວ່າ $1 ລ້ານໂດລາສະຫະລັດຕໍ່ປີ, ແລະ ຍັງຫຼຸດຄວາມສ່ຽງດ້ານຄວາມປອດໄພໃນການຂົນສົ່ງທາງຖະໜົນ ໂດຍມີຈຳນວນພາຫະນະສັນຈອນຫຼຸດລົງ ແລະ ຫຼຸດການປ່ອຍອາຍກາດເຮືອນແກ້ວຫຼາຍກວ່າ 1,500 ໂຕນຕໍ່ປີ.

ການຂົນນ້ຳມັນກະຊວນເທິງລົດຂົນສົ່ງແຮ່ທີ່ເປົ່າຂາກັບ ໄດ້ເພີ່ມຜົນປະໂຫຍດຕໍ່ການຄຸ້ມຄອງການຂົນສົ່ງນ້ຳມັນກະຊວນ ແລະ ເພີ່ມມາດຕະຖານພາຫະນະ ແລະ ການບຳລຸງຮັກສາທີ່ກ່ຽວຂ້ອງ ພາຍໃຕ້ການຄຸ້ມຄອງຂອງບໍລິສັດ ແພນອອສ. ອີງຕາມຂໍ້ມູນການເຜົາໄໝ້ນ້ຳມັນເຊື້ອໄຟ ແລະ ການປ່ອຍສານກ່າກບອນນິກ, ການຂົນນ້ຳມັນກະຊວນເທິງລົດຂົນສົ່ງແຮ່ທີ່ເປົ່າ ຈະຫຼຸດການປ່ອຍສານກ່າກບອນນິກຈຳນວນ 7,800* ໂຕນຕະຫຼອດອາຍຸຂອງບໍ່ຢູ່ ໂຮງງານ ພູຄຳ ແລະ ບ້ານ ຫ້ວຍຊາຍ.

ທີມງານພະແນກຂົນສົ່ງກຳລັງປະເມີນກວດກາການຂົນສົ່ງສິນຄ້າຂາເຂົ້າໃນຖ້ຽວດຽວກັບລົດຂົນສົ່ງແຮ່ທີ່ເປົ່າຂາກັບ, ເຊິ່ງລວມທັງການເສີມຂະຫຍາຍການປ່ຽນຖ່າຍລົດຂົນສົ່ງ ເພື່ອຫຼຸດການປ່ຽນຖ່າຍລົດຂົນສົ່ງປະຈຳບາງສ່ວນທີ່ບໍ່ມີປະສິດທິຜົນ, ເພື່ອຫຼຸດຈຳນວນລົດຂົນສົ່ງຕາມເສັ້ນທາງທີ່ແອອັດ. ລະບົບດັ່ງກ່າວ ມີທ່າແຮງເພື່ອພັດທະນາໃນໂຄງການ ແລະ ການດຳເນີນງານຂອງບໍລິສັດໃນຕໍ່ໜ້າ; ສະແດງໃຫ້ເຫັນເຖິງວິທີການຂອງບໍລິສັດໃນການດຳເນີນທຸລະກິດຢູ່ລາວ, ເປັນການສ້າງຕົ້ນແບບວິທີບໍລິສັດ ແພນອອສ ສືບຕໍ່ດຳເນີນທຸລະກິດໃນແຫ່ງອື່ນໆ.

ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເບິ່ງໜ້າທີ 78 ຂອງບົດທົບທວນການດຳເນີນທຸລະກິດ ແລະ ບົດລາຍງານການພັດທະນາແບບຍືນຍົງ ຂອງ ບໍລິສັດ ແພນອອສ 2017.

* ຕົວເລກນີ້ແມ່ນໄດ້ຈາກການປະຢັດນ້ຳມັນເນື່ອງຈາກການຫຼຸດຜ່ອນການປ່ອຍຄວັນໄອເສຍສຸ່ອາກາດໂດຍຜ່ານການຫຼຸດຜ່ອນປະລິມານການນຳໃຊ້ປາງຕົນລົດ.

ສຸຂະພາບ ແລະ ຄວາມປອດໄພ

ໃນປີ 2017, ບໍລິສັດໄດ້ຮັກສາຜົນໄດ້ຮັບດ້ານຄວາມປອດໄພອັນເປັນເລີດ ຕະຫຼອດການດຳເນີນງານ. ເພື່ອຮັກສາລະດັບໄວ້, ຄວາມພະຍາຍາມໃນການປັບປຸງໃຫ້ດີຂຶ້ນຕື່ມຍັງສືບຕໍ່ໄປ.

0.08
ອັດຕາຄວາມຖີ່ການບາດເຈັບທີ່ສາມາດລາຍງານໄດ້ທັງໝົດແມ່ນບັນລຸໄດ້ 0.08 (97 ສ່ວນຮ້ອຍຕ່ຳກວ່າເປົ້າໝາຍປະຈຳປີ 0.23)

0.83
ອັດຕາຄວາມຖີ່ການບາດເຈັບທີ່ຕ້ອງພັກວຽກ ແມ່ນບັນລຸໄດ້ 0.83 (28 ສ່ວນຮ້ອຍປັບປຸງດີຂຶ້ນ ທຽບໃສ່ປີ 2016)

ການປະຕິບັດວຽກງານດ້ານຄວາມປອດໄພໂດຍລວມ

ຈຸດສຸມຂອງມາດຕະການດ້ານຄວາມປອດໄພໃນປີ 2017 ແມ່ນການປັບປຸງລະບົບປະຈຸບັນ, ແທນການນຳສະເໜີແຜນງານໃໝ່. ພະນັກງານຕ່າງປະເທດປະຈຸບັນແມ່ນໃຫ້ການແນະນຳ ແລະ ຝຶກອົບຮົມລົງປະຕິບັດໃນໜ້າວຽກຕົວຈິງເພີ່ມຂຶ້ນໃຫ້ພະນັກງານຄົນລາວ. ແຜນງານຕົວຊີ້ວັດການນຳພາສືບຕໍ່ສຸມໃສ່ການນຳພາດ້ານຄວາມປອດໄພທີ່ເບິ່ງເຫັນ, ການສັງເກດດ້ານຄວາມປອດໄພໃນວຽກງານຢູ່ພາກສະໜາມ, ການກວດສອບແບບລະອຽດ, ການກວດກາສະຖານທີ່ປະຕິບັດວຽກ, ການກຳນົດຄວາມອັນຕະລາຍ ແລະ ການຝຶກອົບຮົມດ້ານຄວາມປອດໄພ, ແລະ ການສັງເກດໜ້າວຽກຕາມແຜນການ (PTO).

ການຝຶກອົບຮົມດ້ານຄວາມປອດໄພ

ບໍລິສັດໄດ້ຈັດຕັ້ງແຜນງານຝຶກອົບຮົມດ້ານຄວາມປອດໄພຫຼັກທີ່ຕ້ອງປະຕິບັດຕາມຫຼາຍຊຸດ ເຊັ່ນດຽວກັບການຝຶກອົບຮົມຂອງຜູ້ຊ່ຽວຊານສຳລັບວຽກງານທີ່ມີຄວາມສ່ຽງສູງ. ໃນປີ 2017, ການແນະນຳ ແລະ ການຝຶກອົບຮົມດ້ານສຸຂະພາບ, ຄວາມປອດໄພ ແລະ ສິ່ງແວດລ້ອມສຳເລັດໄດ້ 33,639 ຊົ່ວໂມງ.

ສຸຂະພາບຮ່າງກາຍພ້ອມໃນການເຮັດວຽກ

ໃນບໍລິສັດ ພູເບັຍ ມາຍນິງ, ລະບຽບຂັ້ນຕອນການຄຸ້ມຄອງຄວາມອິດເມື່ອຍ ແມ່ນມີໄວ້ປະຈຳ ແລະ ໄດ້ສຸ່ມກວດຫາສານເຫຼົ້າ ແລະ ຢາເສບຕິດ. ໃນໄລຍະປີ 2017, ແຜນລິເລີ່ມຂອງບໍລິສັດເພື່ອຄຸ້ມຄອງຄວາມອິດເມື່ອຍໄດ້ຈັດຕັ້ງປະຕິບັດມີຄື:

- ການພັດທະນາຍຸດທະສາດຂອງຄະນະກຳມະການຄຸ້ມຄອງຄວາມອິດເມື່ອຍ
- ການດຳເນີນໂຄງການມາດຕະຖານການຄຸ້ມຄອງຄວາມອິດເມື່ອຍ ແລະ ການປະເມີນຄວາມສ່ຽງຈາກການຄຸ້ມຄອງຄວາມອິດເມື່ອຍ,
- ການທົບທວນປັດໃຈສ່ຽງທີ່ອາດເກີດຂຶ້ນສຳລັບການຂົນສົ່ງ ແລະ ຂໍ້ມູນຄົ້ນພົບທີ່ໄດ້ນຳສະເໜີໂດຍທີປຶກສາ,
- ການປະເມີນກ້ອງບັນທຶກຄວາມອິດເມື່ອຍໃນລົດ,
- ການປັບປຸງຫ້ອງພັກຂອງພະນັກງານຂັບລົດອັນຕໍ່ເນື່ອງ ເພື່ອຫຼຸດຜ່ອນການລົບກວນຈາກສຽງດັງ ແລະ ແສງສະຫວ່າງ
- ການຈັດງານ 'ວັນແຫ່ງຄວາມປອດໄພຂອງພະແນກຂົນສົ່ງ' ເພື່ອໃຫ້ຄອບຄົວຂອງພະນັກງານຂັບລົດຮັບຊາບວິທີພວກເຂົາສາມາດຊ່ວຍເຫຼືອໃຫ້ພະນັກງານຂັບລົດສາມາດຫຼຸດຜ່ອນຄວາມອິດເມື່ອຍ,
- ການກະຈາຍຄົ້ນວິທະຍຸສຽງເພງຈາກໂຮງງານ ພູຄຳ ຫາ ໂຮງງານ ບ້ານ ຫ້ວຍຊາຍ ໃນລະບົບຄຸ້ມຄອງພາຫະນະທັງໝົດ

ການຄຸ້ມຄອງຜູ້ຮັບເໝົາ

ບໍລິສັດ ພູເບັຍ ມາຍນິງມຸ່ງໝັ້ນປັບປຸງການປະຕິບັດງານດ້ານຄວາມປອດໄພຂອງຜູ້ຮັບເໝົາທ້ອງຖິ່ນ,ແລະ ຄວາມພະຍາຍາມເຫຼົ່ານີ້ຍັງສືບຕໍ່ໃນປີ 2017. ຜູ້ຮັບເໝົາຖືກກຳນົດໃນບຸລິມະສິດຂອງແຜນງານການກວດສອບ ຜູ້ຮັບເໝົາທີ່ມີຄວາມສ່ຽງ ແລະ ການປະຕິບັດວຽກເປັນພື້ນຖານ. ຜູ້ຮັບເໝົາລວມເຂົ້າໃນແຜນງານເອົາໃຈໃສ່ດ້ານຄວາມປອດໄພໃນການດຳເນີນງານ, ແລະ ມີການຈັດກອງປະຊຸມຜູ້ຮັບເໝົາປະຈຳໄຕມາດໃນປີດັ່ງກ່າວ. ຕົວແທນຈາກຜູ້ຮັບເໝົາຫຼັກໄດ້ເຂົ້າຮ່ວມກອງປະຊຸມຄວາມສ່ຽງ ແລະ ຄວາມຍືນຍົງຂອງບໍລິສັດອີກຄັ້ງ. ການກວດສອບສຳລັບຜູ້ຮັບເໝົາຫຼັກທີ່ດຳເນີນກິດຈະການທີ່ມີຄວາມສ່ຽງສູງໄດ້ເຮັດສຳເລັດໂດຍຜ່ານຄະນະບໍລິຫານ.

ມາດຕະຖານການຄຸ້ມຄອງຜູ້ຮັບເໝົາ ທີ່ລະບຸລະອຽດເງື່ອນໄຂຂອງບໍລິສັດ ແພນອອສ ເຊິ່ງລວມເຖິງຄວາມຄາດຫວັງສຳລັບຜູ້ຮັບເໝົາ ແລະ ເຈົ້າຂອງຜູ້ຮັບເໝົາ. ໃນປີ 2017, ຄວາມຄາດຫວັງຂອງມາດຕະຖານດັ່ງກ່າວແມ່ນໄດ້ປະກອບເຂົ້າໃນການຝຶກອົບຮົມສຳລັບເຈົ້າຂອງຜູ້ຮັບເໝົາ ແລະ ຮອງພະແນກ. ຮອດທ້າຍປີ, ຜູ້ຈັດການ, ຮອງພະແນກ ແລະ ພະນັກງານຂັ້ນຄຸມງານ (ຫຼື ທຽບເທົ່າ) ທີ່ເປັນຕາງໜ້າຈາກຜູ້ຮັບເໝົາ ຫຼື ຕາງໜ້າພວກເຂົາຈຳນວນ 85 ຄົນ ໄດ້ສຳເລັດການຝຶກອົບຮົມ.

ນອກນັ້ນ, ການຍົກລະດັບສະຖານທີ່ໃຫ້ຜູ້ຮັບເໝົາມີໂຄງລ່າງລະບົບໄຟ ແລະ ການປັບປຸງສະຖານທີ່ບຳລຸງສ້ອມແປງເຄື່ອນທີ່ຢູ່ໂຮງງານ ພູຄຳ, ແລະ ສະຖານທີ່ສາງເກັບເຄມີ ເພື່ອສ້າງເຂດກັ້ນຂອບບ່ອນເກັບເຄມີຖາວອນຢູ່ໂຮງງານ ບ້ານ ຫ້ວຍຊາຍ.

ອຸປະຕິເຫດຈາກພາຫະນະ

ຄວາມປອດໄພດ້ານພາຫະນະໃນທັງສອງໂຮງງານ, ແລະ ຕາມເສັ້ນທາງຄົມມະນາຄົມ ແລະ ຂົນສົ່ງແຂ່ຍັງຄົງເປັນຂົງເຂດຈຸດສຸມສຳລັບການດຳເນີນທຸລະກິດ. ຄວາມເອົາໃຈໃສ່ຕໍ່ເນື່ອງໃນຂົງເຂດນີ້, ໂດຍມີເປົ້າໝາຍເພື່ອສືບຕໍ່ການປັບປຸງ ໄດ້ສືບຕໍ່ຫຼຸດຄວາມສ່ຽງສູງທີ່ຕິດພັນກັບພາຫະນະເປັນປີທີສີ່ (12 ຄັ້ງໃນປີ 2017; 14 ຄັ້ງໃນປີ 2016; ປີ 2015 ມີ 26 ຄັ້ງ; ປີ 2014 ມີ 44 ຄັ້ງ ແລະ ປີ 2013 ມີ 101 ຄັ້ງ).

ແຜນລິເລີ່ມຕ່າງໆໃນການປັບປຸງປັບປຸງການຂົນສົ່ງພະນັກງານ, ພາຫະນະ, ແລະ ຄວາມປອດໄພຂອງອຸປະກອນເຄື່ອນທີ່ ແມ່ນໄດ້ສືບຕໍ່ເສີມຂະຫຍາຍໃນໄລຍະປີ 2017 ແລະ ລວມມີຄື::

- ສືບຕໍ່ການຕິດຕັ້ງກ້ອງບັນທຶກໃນລົດຂົນສົ່ງ
- ສືບຕໍ່ແບ່ງເຂດທາງຍ່າງສຳລັບພະນັກງານ ແລະ ທາງສັນຈອນຂອງລົດໃນສະຖານທີ່ສ້ອມແປງ ແລະ ສະຖານທີ່ສາງຂອງບໍລິສັດ
- ການດຳເນີນການຂົນສົ່ງຖັງນ້ຳມັນກະຊວນໃນຫຼັງລົດຂົນສົ່ງແຂ່ຂາກັບ ເພື່ອຫຼຸດຜ່ອນຈຳນວນລົດຂົນສົ່ງເທິງຖະໜົນຫຼວງ
- ການພັດທະນາລະບົບຄຸ້ມຄອງ ແລະ ຕິດຕາມກວດກາຊັບສິນໃນແວບໄຊສ໌, ແຜນງານ MyOSH ເພື່ອປັບປຸງການກວດກາເຕັກນິກລົດ ແລະ ກວດສອບ ແລະ ປ້ອງກັນການສໍ້ໂກງໃນການກວດກາເຕັກນິກ.
- ຍົກລະດັບລົດຕູ້ ແລະ ລົດເມ Scania ສຳລັບຂົນສົ່ງພະນັກງານຕາມລະບຽບການອອກແບບຂອງອົດສະຕາລີ (ADR) 68 (ການປ້ອງກັນການກະທົບຂອງຜູ້ໂດຍສານໃນລົດເມ).
- ການສ້າງທີມງານຕອບໂຕ້ເຫດສຸກເສີນ (ERT) ໃນສະຖານທີ່ຂົນສົ່ງຂອງບໍລິສັດ ຢູ່ບ້ານ ທວາຍ ແລະ ທ່າແຂກ

ກໍລະນີສຶກສາ

ການປັບປຸງວັດທະນະທຳດ້ານຄວາມປອດໄພ

ສ້າງຈຸດສຸມໃຫ້ພະນັກງານມີສ່ວນຮ່ວມ ແລະ ສາມາດເບິ່ງເຫັນເຖິງຂໍ້ຜິດພາດບາງຢ່າງ, ລາຍງານ, ຮຽນຮູ້, ແລະ ປັບປຸງເພື່ອປ້ອງກັນ.

ບໍລິສັດ ພູເບ້ຍ ມາຍນິງ ກະຕຸ້ນໃຫ້ພະນັກງານຊອກຫາວິທີໃໝ່ ໃນການປະຕິບັດວຽກງານຢ່າງປອດໄພ ແລະ ເພື່ອໃຫ້ພະນັກງານມີສ່ວນຮ່ວມ ແລະ ຫຼຸດຂໍ້ສົງໃສ. ນີ້ແມ່ນຜ່ານຂະບວນການຄິດຄົ້ນແນວຄິດ ເຊິ່ງຂັບເຄື່ອນການປັບປຸງຂະບວນການ, ຫຼຸດຂໍ້ບົກຜ່ອງທີ່ເກີດຈາກຄົນ, ປັບປຸງປະສິດທິຜົນຂອງການດຳເນີນທຸລະກິດ, ແລະ ເພີ່ມທະວີຜົນໄດ້ຮັບດ້ານຄວາມປອດໄພ.

ທີມງານພະແນກສ້ອມແປງຂອງໂຮງງານ ພູຄຳ ໄດ້ຮັບການຈັດອັນດັບການຄວບຄຸມສົ່ງເຈືອ ປົນຢູ່ໃນລະດັບ 5 ດາວຈາກຄາຕາພິລລາ ເປັນຄັ້ງທີ 5, ເດືອນຕຸລາປີ 2017

ນະວັນທີ 31 ທັນວາ, ທີມງານບຳລຸງສ້ອມແປງເຄື່ອນທີ່ໂຮງງານ ພູຄຳ ໄດ້ບັນລຸການປະຕິບັດວຽກໂດຍປາດສະຈາກການບາດເຈັບຈຳນວນ 1,728 ວັນ, ເທົ່າກັບການປະຕິບັດວຽກໂດຍປາດສະຈາກການບາດເຈັບທີ່ບັນທຶກໄດ້ 4,843,496 ຊົ່ວໂມງ. ຜົນສຳເລັດອັນພົ້ນເດັ່ນດັ່ງກ່າວສາມາດໄດ້ມາຈາກ ໂຄງການປັບປຸງວັດທະນະທຳດ້ານຄວາມປອດໄພຂອງທີມງານບຳລຸງສ້ອມແປງ.

ໂຄງການຮັກສາມາດຕະຖານຄຸ້ມຄອງສານຕົກຄ້າງລະດັບ 5 ດາວຂອງແຄດເທີພິລາ

ໂດຍມີການນຳສະເໜີໃນປີ 2013, ໂຄງການຮັກສາມາດຕະຖານຄຸ້ມຄອງສານຕົກຄ້າງລະດັບ 5 ດາວຂອງແຄດເທີພິລາ ແມ່ນຕົວຊີ້ວັດຄວາມເປັນເລີດດ້ານມາດຕະຖານ ແລະ ການປະຕິບັດການຮັກສາຄວາມສະອາດ ແລະ ຄວາມເປັນເລີດດ້ານການດຳເນີນງານ. ທີມງານບຳລຸງສ້ອມແປງເຄື່ອນທີ່ ປະຈຳໂຮງງານ ພູຄຳ ແລະ ບ້ານ ຫ້ວຍຊາຍ ໄດ້ເຂົ້າຮ່ວມໃນຂະບວນການລະອຽດເພື່ອຮັກສາມາດຕະຖານ 5 ດາວຂອງພວກເຂົາ. ທີມງານດັ່ງກ່າວຕ້ອງປະຕິບັດຕາມການຄຸ້ມຄອງຄວາມປອດໄພທີ່ດີ ສຳລັບມາດຕະຖານ ແລະ ການປະຕິບັດດ້ານການຮັກສາຄວາມສະອາດ, ການປັບປຸງຄວາມແຂງແກ່ນຂອງອຸປະກອນ, ການຕ່ອາຍຸສິ້ນສ່ວນຂະໜາດໃຫຍ່.

ໂຄງການດັ່ງກ່າວ ໄດ້ສ້າງຄວາມເຂັ້ມແຂງໃນວັດທະນະທຳດ້ານຄວາມປອດໄພຂອງທີມງານບຳລຸງສ້ອມແປງ ແລະ ໄດ້ສ້າງຜົນໄດ້ຮັບດ້ານຄວາມປອດໄພທີ່ປັບປຸງດີຂຶ້ນ ເຊິ່ງເສີມຂະຫຍາຍຂະບວນການ ເຊິ່ງຊຸກຍູ້ໃຫ້ມີຜົນການດຳເນີນງານທີ່ດີເດັ່ນ.

ກອງປະຊຸມກ່ອນການປະຕິບັດວຽກງານ

ກອງປະຊຸມດ້ານຄວາມປອດໄພກ່ອນການປະຕິບັດວຽກງານ ໄດ້ຈັດຂຶ້ນທຸກໆຕອນເຊົ້າສຳລັບກຸ່ມພະນັກງານບຳລຸງສ້ອມແປງ ກ່ອນການປະຕິບັດວຽກງານ. ກອງປະຊຸມດັ່ງກ່າວໄດ້ເສີມຂະຫຍາຍ ແລະ ສົ່ງເສີມໃຫ້ພະນັກງານມີສ່ວນຮ່ວມ ເພື່ອກຳນົດຄວາມເປັນຫ່ວງດ້ານຄວາມປອດໄພໃນຂົງເຂດສະເພາະ, ເຊິ່ງໄດ້ປັບປຸງການປຸກຈິດສຳນຶກດ້ານຄວາມປອດໄພໂດຍລວມ.

ໂຄງການ MyOSH

ໂຄງການ MyOSH - ຖານຂໍ້ມູນກວດກາເຕັກນິກລົດ ແລະ ຊັບສິນຜ່ານແວບໄຊສ ແມ່ນໄດ້ນຳສະເໜີໃນປີ 2017 ເພື່ອແກ້ໄຂຄວາມເປັນຫ່ວງດ້ານຄວາມປອດໄພ ໂດຍມີຜົນມາຈາກອຸປະຕິເຫດພາຫະນະໃນປີ 2013 ແລະ ເພື່ອປ້ອງກັນການກວດກາເຕັກນິກລົດທີ່ບໍ່ຖືກຕ້ອງ.

ລົດຂອງບໍລິສັດ ພູເບ້ຍ ມາຍນິງທັງໝົດທີ່ຜ່ານການກວດກາ ຈະຮັບສະຕິກເກີ້ຢັ້ງຢືນການກວດກາ ເຊິ່ງພະນັກງານຮັກສາຄວາມປອດໄພຕ້ອງໄດ້ກວດກາທຸກຄັ້ງເວລາພາຫະນະເຂົ້າ-ອອກເຂດດຳເນີນງານ. ລະຫັດຄິວອາທີເຊື່ອມຕໍ່ເຂົ້າຖານຂໍ້ມູນກວດກາເຕັກນິກລົດ ແມ່ນໄດ້ເພີ່ມເຂົ້າໃນສະຕິກເກີ້. ລະຫັດດັ່ງກ່າວ ຈະອຳນວຍຄວາມສະດວກໃຫ້ພະນັກງານປ້ອງກັນຄວາມປອດໄພ ສາມາດກວດກາປະຫວັດການບຳລຸງສ້ອມແປງພາຫະນະຢ່າງວ່ອງໄວ ແລະ ມີປະສິດທິພາບ.

ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເບິ່ງໜ້າທີ 87 ຂອງບົດທົບທວນການດຳເນີນທຸລະກິດ ແລະ ບົດລາຍງານການພັດທະນາແບບຍືນຍົງ ຂອງ ບໍລິສັດ ແພນອອສ 2017.

ພະນັກງານຂອງພວກເຮົາ

ໃນປີ 2017, ບໍລິສັດຮັກສາຜົນສຳເລັດຕາມຂີດໝາຍການນຳໃຊ້ແຮງງານທ້ອງຖິ່ນໃນປີຜ່ານມາຈາກ 91 ສ່ວນຮ້ອຍ. ຜົນສຳເລັດດັ່ງກ່າວແມ່ນເກີດຈາກຜົນປະ�โยດຂອງການພັດທະນາ ແລະ ການຝຶກອົບຮົມພະນັກງານລາວ.

3,293 ພະນັກງານເຮັດວຽກເຕັມເວລາ	**92** ຈຳນວນຊົ່ວໂມງການຝຶກອົບຮົມ ໂດຍສະເລັ່ຍ ຕໍ່ ພະນັກງານ	**62** ພະນັກງານລາວທີ່ໄດ້ເລື່ອນຕຳແໜ່ງ ເປັນພະນັກງານວິຊາການລະດັບສູງ ຫຼື ຫົວໜ້າທີມງານ

ແຮງງານທ້ອງຖິ່ນ

ການຫັນມາໃຊ້ແຮງງານທ້ອງຖິ່ນ ແມ່ນມີຜົນຈາກການຝຶກອົບຮົມ ແລະ ການພັດທະນາພະນັກງານລາວໃຫ້ມີທັກສະນະ ແລະ ຄວາມສາມາດຈຳເປັນຕໍ່ການປະຕິບັດງານໃນຕຳແໜ່ງທີ່ລະດັບສູງຂຶ້ນ.

ໃນປີ 2017, ບໍລິສັດໄດ້ຮັກສາຜົນສຳເລັດອັນສຳຄັນໃນການຫັນມານຳໃຊ້ແຮງງານທ້ອງຖິ່ນຈຳນວນ 91 ສ່ວນຮ້ອຍຂອງພະນັກງານທັງໝົດ. ໄລຍະປີດັ່ງກ່າວ, ພະນັກງານລາວ 234 ຄົນທົ່ວເຂດດຳເນີນທຸລະກິດໄດ້ຮັບການເລື່ອນຕຳແໜ່ງ ຫຼື ປັບຂັ້ນເງິນເດືອນ. ອັນພົ້ນເດັ່ນແມ່ນ ພະນັກງານລາວ 62 ຄົນໄດ້ຮັບການເລື່ອນຕຳແໜ່ງໃນຂັ້ນນຳພາ ແລະ ວິຊາການລະດັບສູງ, ພະນັກງານຫ້າຄົນ ໄດ້ເລື່ອນເປັນຮອງພະແນກ. ຫຼາຍແຜນງານ ແລະ ໂຄງການຕໍ່ເນື່ອງທີ່ເປັນທາງການສະໜັບສະໜຸນການພັດທະນາພະນັກງານລາວໄດ້ລະບຸດັ່ງຕໍ່ໄປນີ້.

ໂຄງການພັດທະນາຄວາມເປັນຜູ້ນຳ

ການພັດທະນາຄວາມເປັນຜູ້ນຳພາ ແມ່ນມີສອງໂຄງການແຍກຕ່າງຫາກທີ່ສົ່ງເສີມເຊິ່ງກັນ ແລະ ກັນ: ໂຄງການຝຶກອົບຮົມທັກສະການຊີ້ນຳ ແລະ ການນຳຕາມແນວທາງຂອງ ແພນອອສ.

ໂຄງການພັດທະນາທັກສະການຊີ້ນຳ

ໃນປີ 2017, ພະນັກງານຈຳນວນ 166 ຄົນ (ຍິງ 26 ຄົນ) ໄດ້ເຂົ້າຮ່ວມໂຄງການພັດທະນາທັກສະການຊີ້ນຳ ເຊິ່ງອອກແບບມາສຳລັບຫົວໜ້າທີມງານ, ພະນັກງານທີ່ມີບົດບາດຊີ້ນຳ ແລະ ມີທ່າກ້າວສູງ ໂດຍການຝຶກອົບຮົມແມ່ນຈຳເປັນ ເພື່ອສ້າງຄວາມສຳເລັດໃນບົດບາດຄຸມງານແຖວໜ້າ.

ພະນັກງານແຕ່ລະຄົນສຳເລັດການຝຶກອົບຮົມຕາມໂຄງສ້າງ ແລະ ແບບຝຶກຫັດຫຼັງຫຼັກສູດຫຼາຍກວ່າ 80 ຊົ່ວໂມງ. ໂຄງການພັດທະນາຄວາມເປັນຜູ້ນຳ ໄດ້ມີສ່ວນຊ່ວຍໃຫ້ບໍລິສັດສາມາດແຕ່ງຕັ້ງພະນັກງານລາວຂຶ້ນຮັບຕຳແໜ່ງຂັ້ນສູງ ແລະ ໄດ້ຊ່ວຍຫຼຸດຜ່ອນການເອື່ອຍອີງພະນັກງານຕ່າງປະເທດ.

ການນຳພາຕາມແນວທາງຂອງ ແພນອອສ

ການນຳພາຕາມແນວທາງຂອງ ແພນອອສ ແມ່ນໂຄງການພັດທະນາຄວາມເປັນຜູ້ນຳທີ່ອອກແບບສະເພາະພາຍໃນ ແລະ ເຈາະຈົງ ເຊິ່ງເຊື່ອມສານອົງປະກອບສຳຄັນຂອງແນວທາງ, ວິໄສທັດ ແລະ ຄຸນນະທຳ ແລະ ຍຸດທະສາດຕາມແນວທາງຂອງ ແພນອອສ, ການສຳຫຼວດການຕິຊົມແບບ 360 ອົງສາ ແລະ ແຜນການພັດທະນາຄວາມເປັນຜູ້ນຳ. ໂຄງການດັ່ງກ່າວ ແນໃສ່ເສີມຂະຫຍາຍແຜນການປ່ຽນແທນຕຳແໜ່ງທີ່ມີຢູ່ໂດຍການພັດທະນາກຸ່ມຜູ້ນຳພາພາຍໃນ ແລະ ຜູ້ນຳທີ່ມີທ່າກ້າວສຳລັບບໍລິສັດ.

ໃນປີ 2017, ໂຄງການດັ່ງກ່າວໄດ້ດຳເນີນໃນລະດັບຜູ້ບໍລິຫານຢ່າງປະສົບຜົນສຳເລັດ. ຕົວແບບການສ້າງຄວາມສາມາດດ້ານການນຳພາ ໄດ້ນຳສະເໜີໃນລະດັບຮອງພະແນກ, ແລະ ຈະດຳເນີນນຳພະນັກງານທັງໝົດໃນທີ່ສຸດ.

ໂຄງການໃຫ້ຄຳປຶກສາວຽກງານ

ແຜນງານໃຫ້ຄຳປຶກສາວຽກງານແມ່ນແຜນລິເລີ່ມຈັດຕັ້ງປະຕິບັດພາຍໃນບໍລິສັດເພື່ອແນະນຳ ແລະ ຊຸກຍູ້ໃຫ້ພະນັກງານທີ່ມີຄວາມສາມາດສູງ, ຜູ້ທີ່ສາມາດເປັນຜູ້ນຳພາໃນຕໍ່ໜ້າ ໄດ້ນຳໃຊ້ຄວາມສາມາດຂອງຕົນຢ່າງເຕັມສ່ວນ. ການທົບທວນຂອງແຜນງານທົດລອງເບື້ອງຕົ້ນ ເຊິ່ງໄດ້ຈັດຕັ້ງໃນປີ 2013 ແລະ 2017 ພົບວ່າ ແຜນງານນີ້ໄດ້ສ້າງຜົນປະ�โยດສອງສົ່ນທັງພະນັກງານລາວທີ່ເຂົ້າຝຶກ ແລະ ຜູ້ໃຫ້ຄຳປຶກສາຕ່າງປະເທດ, ເຊິ່ງສ້າງຜົນປະ�โยດທີ່ມີການສ້າງຄວາມເພິ່ງພໍໃຈໃນວຽກງານເພີ່ມຂຶ້ນ ແລະ ການມີສ່ວນຮ່ວມຫຼາຍຂຶ້ນ.

ແຜນງານໃໝ່ໄລຍະສິບແປດເດືອນ ເຊິ່ງເລີ່ມໃນເດືອນ ພະຈິກ ປີ 2017, ໂດຍມີການຄັດເລືອກກຸ່ມພະນັກງານທີ່ມີຄວາມເປັນຜູ້ນຳສູງ 28 ຄົນຈາກບໍລິສັດ ແພນອອສ ແລະ ບໍລິສັດ ພູເບ້ຍ ມາຍນິງ ໄດ້ສຳເລັດການຝຶກອົບຮົມໃນທ້າຍເດືອນ ຕຸລາ. ຜູ້ໃຫ້ຄຳປຶກສາຜູ້ເກົ່າ ແລະ ຜູ້ໃໝ່ ທີ່ໄດ້ເຂົ້າຮ່ວມການຝຶກອົບຮົມຍົກລະດັບຄືນ ໄດ້ສຳເລັດການຝຶກອົບຮົມທີ່ຈຳເປັນຂອງພວກເຂົາ ໃນເດືອນ ຕຸລາ.

ການຝຶກອົບຮົມຊ່າງສີມືແຮງງານດ້ານເຕັກນິກ / ໂຄງການຊ່າງຝຶກຫັດ

ບໍລິສັດ ພູເບ້ຍ ມາຍນິງ ຈຳກັດໄດ້ຈັດຕັ້ງປະຕິບັດ 2 ໂຄງການຝຶກອົບຮົມ. ໂຄງການທີ 1 ແມ່ນໂຄງການຊ່າງຝຶກອົບຮົມສີມືແຮງງານສຳລັບພະນັກງານສ້ອມແປງ, ເຊິ່ງມີການປະເມີນທັກສະ ແລະ ມີແຜນການຝຶກອົບຮົມໃຫ້ພະນັກງານແຕ່ລະຄົນ. ໂຄງການດັ່ງກ່າວໄດ້ເລີ່ມໃນເດືອນກັນຍາ 2014, ແລະ ມາຮອດທ້າຍປີ 2017 ມີພະນັກງານລາວຈຳນວນເຖິງ 221 ຄົນຍົກລະດັບຈາກຜູ້ຊ່ວຍຊ່າງມາເປັນລະດັບຊ່າງສີມືແຮງງານ.

ໂຄງການທີ 2 ແມ່ນໂຄງການຊ່າງຝຶກຫັດ ເຊິ່ງເລີ່ມຈັດຕັ້ງປະຕິບັດໃນປີ 2013. ໂຄງການຝຶກຫັດມີໄລຍະ 5 ປີ ໃນດ້ານຊ່າງສີມືແຮງງານດ້ານເຕັກນິກ ເຊິ່ງໄດ້ຈັດຕັ້ງປະຕິບັດໂດຍການຮ່ວມມືກັບວິທະຍາໄລການຊ່າງ ລາວ-ເຍຍລະມັນ ຢູ່ນະຄອນຫຼວງວຽງຈັນ. ໃນເດືອນ ຕຸລາ, ນັກສຶກສາລຸ້ນທຳອິດຂອງບໍລິສັດໄດ້ຈົບຈາກໂຄງການ (ກະລຸນາເບິ່ງກໍລະນີສຶກສາໜ້າ 20). ນັກສຶກສາອີກ 50 ຄົນ ເຊິ່ງມີຍິງແປດຄົນ ແມ່ນຢູ່ປີສຸດທ້າຍຂອງຫຼັກສູດໃນປີ 2018.

ຄວາມຜູກພັນຂອງບໍລິສັດກັບພະນັກງານ

ໃນເດືອນ ພຶດສະພາ, ບໍລິສັດແມ່ນຂອງບໍລິສັດ ພູເບ້ຍ ມາຍນິງ, ບໍລິສັດ ແພນອອສ ໄດ້ດຳເນີນການສຳຫຼວດຄວາມຜູກພັນຂອງບໍລິສັດກັບພະນັກງານ ແບບເປີດກ້ວາງ ທົ່ວກຸ່ມບໍລິສັດໃນຫົວຂໍ້ ຄຳເຫັນຂອງທ່ານ ເພື່ອປະເມີນອົງປະກອບທັງໝົດຂອງກອບວຽກງານຊັບພະຍາກອນມະນຸດ, ຍຸດທະສາດການຫັນມານຳໃຊ້ແຮງງານທ້ອງຖິ່ນ, ແຜນການຝຶກອົບຮົມ ແລະ ການພັດທະນາ ແລະ ວົງຈອນເຮັດວຽກຂອງພະນັກງານ.

ການສຳຫຼວດແມ່ນມີຈຸດປະສົງ ເພື່ອແຈ້ງໃຫ້ບໍລິສັດຊາບ ເຖິງຜົນຂອງແຜນງານທີ່ໄດ້ຈັດຕັ້ງປະຕິບັດ ພາຍຫຼັງການສຳຫຼວດພະນັກງານໃນປີ 2013 ກ່ຽວກັບຜົນໄດ້ຮັບດ້ານບວກ, ຮັບຮູ້ທັດສະນະຂອງພະນັກງານກ່ຽວກັບການປິດບໍ່ອັນໃກ້. ຜົນສຳຫຼວດຈາກພະນັກງານທັງໝົດ 85 ສ່ວນຮ້ອຍ ທີ່ໄດ້ເຂົ້າຮ່ວມແມ່ນໄປໃນດ້ານບວກ.

ກໍລະນີສຶກສາ

ນັກສຶກສາຈົບຈາກໂຄງການຊ່າງຝຶກຫັດຊຸດທຳອິດ

ບໍລິສັດ ພູເບ້ຍ ມາຍນິງ ຕັ້ງເປົ້າເສີມຂະຫຍາຍທັກສະແຮງງານທ້ອງຖິ່ນໃນເຂດດຳເນີນງານຂອງຕົນ.

ເລີ່ມສ້າງຕັ້ງໃນປີ 2013 ແລະ ໂດຍຜ່ານການຮ່ວມມືກັບວິທະຍາໄລການຊ່າງລາວ- ເຢຍລະມັນຢູ່ ນະຄອນຫຼວງວຽງຈັນ, ໂຄງການຊ່າງຝຶກຫັດຂອງບໍລິສັດ ພູເບ້ຍ ມາຍນິງໄດ້ນຳສະເໜີ ໂດຍມີເປົ້າໝາຍພັດທະນາພະນັກງານການຊ່າງທ້ອງຖິ່ນທີ່ມີຄຸນນະວຸດ ແລະ ຫຼຸດຜ່ອນຄວາມເອື່ອຍອີງໃສ່ພະນັກງານຕ່າງປະເທດຂອງບໍລິສັດ ຜ່ານການຫັນມານຳໃຊ້ແຮງງານທ້ອງຖິ່ນເພີ່ມຂຶ້ນ.

ນັກຮຽນຝຶກຫັດຊ່າງສີມືແຮງງານ ສະເຫຼີມສະຫຼອງຄວາມສຳເລັດຂອງຕົນຮ່ວມກັບຜູ້ອຳນວຍການໃຫຍ່ ແລະ ຄະນະບໍລິຫານຂອງບໍລິສັດຫຼາຍທ່ານຢູ່ທີ່ພິທີມອບ-ຮັບໃບປະກາດ, ເດືອນຫັນວາປີ 2017

ຜູ້ສະໝັກເຂົ້າໂຄງການ ແມ່ນຕ້ອງໄດ້ຜ່ານການຝຶກອົບຮົມສີມືແຮງງານ ກ່ອນເຂົ້າໂຄງການຊ່າງຝຶກຫັດໄລຍະສີ່ປີ.

ໃນເດືອນ ຕຸລາ 2017, ນັກສຶກສາຈົບໂຄງການຂອງບໍລິສັດຊຸດທຳອິດຈຳນວນ 34 ຄົນ, ມີຍິງຫ້າຄົນ, ໄດ້ສຳເລັດການປະເມີນຄັ້ງສຸດທ້າຍ ແລະ ໄດ້ໃບປະກາດສະນິຍະບັດຄຸນນະວຸດການຊ່າງຂັ້ນ III ຈາກອົດສະຕາລີ ແລະ ໃບປະກາດຊັ້ນສູງການຝຶກອົບຮົມການຊ່າງ. ນັກສຶກສາໄດ້ຈົບການຊ່າງຈາກໜຶ່ງໃນວິຊາເຊັ່ນ: ໄຟຟ້າ, ກົນຈັກໜັກ, ການເຊື່ອມ ແລະ ການຈອດ, ການສ້ອມແປງ ແລະ ປະກອບກົນຈັກ. ພາຍຫຼັງສຳເລັດການສຶກສາ, ນັກສຶກສາໄດ້ບັນຈຸເຂົ້າຮັບຕຳແໜ່ງການຊ່າງຢູ່ພະແນກສ້ອມແປງໂຮງງານ ແລະ ບຳລຸງສ້ອມແປງເຄື່ອນທີ່ໃນເດືອນ ທັນວາ.

ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເບິ່ງໜ້າທີ 61 ຂອງບົດທົບທວນການດຳເນີນທຸລະກິດ ແລະ ບົດລາຍງານການພັດທະນາແບບຍືນຍົງ ຂອງ ບໍລິສັດ ແພນອອສ 2017.